ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

05-08 ກໍລະກົດ 2022
ປີທີ 11
ສະບັບທີ 857

## ກອງປະຊຸມອາທິດສຸດທ້າຍ ພິຈາລະນາ 2 ຮ່າງກົດໝາຍສ້າງໃໝ່

(ສພຊ) ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ກ້າວເຂົ້າສູ່ວາລະອາທິດທີ 4 ເຊິ່ງເປັນອາທິດສຸດທ້າຍຂອງການດຳເນີນກອງປະຊຸມສະໄໝສາມັນຄັ້ງນີ້ ເຊິ່ງໃນລະຫວ່າງວັນທີ 4-5 ກໍລະກົດ 2022 ຍັງແມ່ນວາລະສືບຕໍ່ການຄົ້ນຄວ້າພິຈາລະນາກົດໝາຍ ຈຳນວນ 2 ສະບັບ ໂດຍການຜັດປ່ຽນກັນເປັນປະທານກອງປະຊຸມຂອງທ່ານຮອງປະທານສະພາແຫ່ງຊາດຄື: ທ່ານ ຄຳໃບ ດຳລັດ ແລະ ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ; ເຂົ້າຮ່ວມເປັນຄະນະປະທານກອງປະຊຸມມີພະນະທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຮອງປະທານສະພາແຫ່ງຊາດ.






ໃນວາລະກອງປະຊຸມ, ໄດ້ມີການພິຈາລະນາກົດໝາຍສ້າງໃໝ່ ຈຳນວນ 2 ສະບັບຄື: ຮ່າງກົດໝາຍວ່າດ້ວຍວິຈິດສິນ (ສ້າງໃໝ່) ສະເໜີໂດຍທ່ານ ວັນສີ ກົວມົວ ຮອງລັດຖະມົນຕີກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ (ສ້າງໃໝ່) ສະເໜີໂດຍທ່ານນາງ ຈັນສະຫວາດ ບຸບຜາ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ຄົ້ນຄວ້າປະກອບຄຳຄິດຄຳເຫັນ ເຮັດໃຫ້ເນື້ອໃນຂອງບັນດາກົດໝາຍດັ່ງກ່າວ ມີຄວາມຖືກຕ້ອງ, ສອດຄ່ອງ, ແທດເໝາະ ແລະ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຕົວຈິງ ໃຫ້ເກີດປະໂຫຍດສູງສຸດຕໍ່ປະຊາຊົນ ກໍຄືປະເທດຊາດ ຕາມຄຳເຈາະຈີ້ມ ແລະ ໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນຂອງປະທານກອງປະຊຸມ.

ໂອກາດດັ່ງກ່າວ, ອະນຸກຳມະການຮັບຜິດຊອບຮ່າງກົດໝາຍທັງ 2 ສະບັບດັ່ງກ່າວ ຍັງໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ຄຳຊັກຖາມ ແລະ ເຈາະຈີ້ມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ໃນຕອນທ້າຍ, ປະທານກອງປະຊຸມ ຍັງໄດ້ສະຫລຸບສັງລວມການປະກອບຄຳເຫັນໃນທີ່ປະຊຸມ ເພື່ອໃຫ້ພາກສ່ວນທີ່ຮັບຜິດຊອບນຳໄປປັບປຸງບັນດາເນື້ອໃນຂອງກົດໝາຍໃຫ້ມີຄວາມຖືກຕ້ອງສອດຄ່ອງຍິ່ງຂຶ້ນ.

(ນາງ ປາກາລັກ ພົມມີໄຊ)

## ກຕທ ປຶກສາຫາລືບັນຫາສຳຄັນ



ໜ້າ 2

## ຮູ້ຈັກກັບສະຫະພັນລັດຖະສະພາສາກົນ

# ວິເສດ ສະແຫວງສຶກສາ

ສະຫະພັນລັດຖະສະພາສາກົນ (Inter-Parliamentary Union-IPU) ຫລື ໄອພິຢູ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 30 ມິຖຸນາ 1889 ໂດຍການລິເລີ່ມຂອງທ່ານ ວິນລຽມ ແຣມດານ ເກຼມເມີ ສະມາຊິກອາວຸໂສຂອງລັດຖະສະພາອັງກິດ ແລະ ທ່ານ ເຟເດຣິກ ປາຊີ (Frederic Passy) ສະມາຊິກອາວຸໂສຂອງປະເທດຝຣັ່ງ ທັງສອງຄົນນີ້ແມ່ນນັກຕໍ່ສູ້ຄົນສຳຄັນເພື່ອສັນຕິພາບໂລກ. ສຳນັກງານໃຫຍ່ຂອງສະຫະພັນລັດຖະສະພາສາກົນ ເຊິ່ງຕໍ່ໄປຂໍເອີ້ນຊື່ຫຍໍ້ວ່າ: ໄອພິຢູ ຕັ້ງຢູ່ນະຄອນເຊີແນວ ປະເທດເຊີວິດສະແລນ ໃນປັດຈຸບັນ. ໄອພິຢູ ມີສະມາຊິກ ຈຳນວນ 178 ປະເທດທີ່ມີລະບົບລັດຖະສະພາຜ່ານການເລືອກຕັ້ງ ຕາມຫລັກການປະຊາທິປະໄຕ, ເສລີ ແລະ ຍຸຕິທຳ, ນອກຈາກສະມາຊິກເປັນແຕ່ລະປະເທດແລ້ວ, ໄອພິຢູ ຍັງມີສະມາຊິກທີ່ເປັນກຸ່ມລັດຖະສະພາໃນພາກພື້ນ ແລະ ຂົງເຂດ

ອ່ານຕໍ່ໜ້າ 3

## ສະເໜີການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ

ໃນວັນທີ 28 ມິຖຸນາຜ່ານມາ, ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ໄດ້ຂຶ້ນສະເໜີກ່ຽວກັບການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ມີລາຍລະອຽດດັ່ງນີ້:

**I. ຄວາມຈຳເປັນ ແລະ ສາເຫດໃນການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ**



ເພື່ອເຮັດໃຫ້ການເຄື່ອນໄຫວດ້ານເງິນຕາຕ່າງປະເທດ ສປປລາວ ໄດ້ຮັບການຄຸ້ມຄອງສອດຄ່ອງກັບເງື່ອນໄຂເສດຖະກິດ ຢ່າງເປັນລະບົບຫລາຍຂຶ້ນ ໃນໄລຍະຜ່ານມາ ລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ສປປ, ລົງວັນທີ 9 ສິງຫາ 2002 ແລະ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008 ທີ່ມີພື້ນຖານມາຈາກດຳລັດຂອງສະພາລັດຖະມົນຕີວ່າດ້ວຍການຄຸ້ມຄອງຈໍລະຈອນເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ

ອ່ານຕໍ່ໜ້າ 7

## ຄະນະມິດຕະພາບລັດຖະສະພາ ປຶກສາຫາລືແຜນເຄື່ອນໄຫວຂອງ ລາວ ແລະ ອັງກິດ

(ສພຊ) ໃນວັນທີ 23 ມິຖຸນາຜ່ານມາ, ຄະນະມິດຕະພາບລັດຖະສະພາ ສະພາແຫ່ງຊາດລາວ ແລະ ລັດຖະສະພາ ແຫ່ງ ສະຫະຣາຊະອານາຈັກອັງກິດ ໄດ້ຈັດກອງປະຊຸມປຶກສາຫາລືແຜນການເຄື່ອນໄຫວຂອງຄະນະມິດຕະພາບລັດຖະສະພາຂອງຕົນ ໂດຍການເປັນປະທານຂອງທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ທັງເປັນປະທານຄະນະມິດຕະພາບລັດຖະສະພາ ສະພາແຫ່ງຊາດລາວ ແລະ ຄະນະລັດຖະສະພາ ແຫ່ງ ສະຫະຣາຊະອານາຈັກອັງກິດ



ໂດຍມີທ່ານຮອງປະທານ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ທີ່ເປັນຄະນະມິດຕະພາບລັດຖະສະພາ ສະພາແຫ່ງຊາດລາວ ແລະ ລັດຖະສະພາ ແຫ່ງ ສະຫະຣາຊະອາຈັກອັງກິດ ພ້ອມດ້ວຍພະນັກງານກອງເລຂາຊ່ວຍວຽກເຂົ້າຮ່ວມ.

ກອງປະຊຸມ ໄດ້ປຶກສາຫາລືກ່ຽວກັບແຜນການເຄື່ອນໄຫວວຽກງານປະຈຳປີຂອງຄະນະ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນ.

## ກຳມາທິການ ... 

## ກບຜ ສືບຕໍ່ຈັດຕັ້ງປະຕິບັດວຽກງານໃນແຕ່ລະດ້ານໃຫ້ສຳເລັດຜົນ

ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX; ທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າ (ກບຜ) ຂອງສະພາແຫ່ງຊາດ ໄດ້ໃຫ້ສຳພາດກັບສື່ມວນຊົນ ໃນວັນທີ 22 ມິຖຸນາຜ່ານມາ ເຊິ່ງທ່ານໄດ້ໃຫ້ຮູ້ວ່າ: ກບຜ ເປັນໜຶ່ງໃນກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ຊຸດທີ IX ເປັນເສນາທິການໃຫ້ແກ່ສະພາແຫ່ງຊາດ ໃນການຕິດຕາມກວດກາຕາມ 3 ພາລະບົດບາດຂອງສະພາແຫ່ງຊາດ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການບັນດາເຜົ່າ ໃນວຽກງານຊົນເຜົ່າ ແລະ ສາສະໜາ, ວຽກງານພັດທະນາຊົນນະ

ອ່ານຕໍ່ໜ້າ 2

## ກອງປະຊຸມສະພາທີ່ປຶກສາຂອງໄອປາ




ໜ້າ 2



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 4

**ສືບຕໍ່ຕິດຕາມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX**



## ກຕທ...

(ສພຊ) ວັນທີ 30 ມິຖຸນາ 2022, ທີ່ຫໍສະພາແຫ່ງຊາດ ຈັດໂດຍກຳມາທິການການຕ່າງປະເທດ (ກຕທ) ເຊິ່ງໄດ້ປຶກສາຫາລືເນື້ອໃນສຳຄັນຂອງກຳມາທິການການຕ່າງປະເທດ ໂດຍປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການການຕ່າງປະເທດ ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ໂດຍການເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ທັງເປັນຜູ້ຊີ້ນຳວຽກງານການຕ່າງປະເທດ; ມີສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການການຕ່າງປະເທດ ປະຈຳແຕ່ລະເຂດເລືອກຕັ້ງໃນຂອບເຂດທົ່ວປະເທດ ແລະ ບັນດາກົມທີ່ເປັນເສນາທິການໃຫ້ແກ່ກຳມາທິການການຕ່າງປະເທດ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງການຈັດກອງປະຊຸມຄັ້ງນີ້ ແມ່ນເພື່ອປຶກສາຫາລືກ່ຽວກັບຮ່າງແຜນພັດທະນາວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ໄລຍະ 5 ປີ 2021-2025; ແຜນການຈັດກິດຈະກຳຕິດພັນກັບການສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ-ລາວ ປີ 2022 ລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ແລະ ປຶກສາຫາລືການປະສານງານກັນລະຫວ່າງບັນດາກຳມະການຂອງກຳມາທິການການຕ່າງປະເທດ, ຄະນະນຳກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ກັບກຳມະການຂອງກຳມາທິການການຕ່າງປະເທດປະຈຳຢູ່ເຂດເລືອກຕັ້ງໃນທົ່ວປະເທດ ແລະ ສະພາປະຊາຊົນຂັ້ນແຂວງແລະບັນຫາອື່ນໆ.

ຜ່ານການຮັບຟັງບັນດາບົດລາຍງານຕໍ່ກັບກອງປະຊຸມປຶກສາຫາລືເນື້ອໃນສຳຄັນຕ່າງໆຂອງກຳມາທິການການຕ່າງປະເທດ, ບັນດາສະມາຊິກສະພາແຫ່ງຊາດ, ກຳມະການຂອງກຳມາທິການການຕ່າງປະເທດ ໄດ້ປະກອບຄຳຄິດຄຳເຫັນ, ຂໍ້ສະເໜີ ແລະ ຂໍ້ຄິດເຫັນການແກ້ໄຂບັນຫາຄົງຄ້າງຕ່າງໆ ຢ່າງກົງໄປກົງມາ ແນ່ໃສ່ຈັດຕັ້ງປະຕິບັດວຽກງານການຕ່າງປະເທດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກອງປະຊຸມໄດ້ຮັບຟັງການໂອ້ລົມ ແລະ ໃຫ້ທິດຊີ້ນຳຈາກທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເຊິ່ງທ່ານໄດ້ມີຄຳເຫັນຊີ້ນຳວ່າ: ໃຫ້ປັບປຸງແບບແຜນວິທີການເຮັດວຽກຂອງກຳມາທິການການຕ່າງປະເທດ, ເພີ່ມຂອດການປະສານງານລະຫວ່າງກຳມາທິການ ກັບສະມາຊິກສະພາແຫ່ງຊາດ ແລະ ພ້ອມກັບການປະສານງານສົມທົບກັບຝ່າຍສະພາແຫ່ງຊາດຫວຽດນາມ ເພື່ອກຳນົດທິດທາງການສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ 2022.



## ກບຜ...

ບົດ ແລະ ແກ້ໄຂຄວາມທຸກຍາກ, ວຽກງານແນວໂຮມ, ວຽກງານປົກຄອງທ້ອງຖິ່ນ, ວຽກງານ 3 ສ້າງ ແລະ ວຽກງານອົງການຈັດຕັ້ງມະຫາຊົນ ເຊິ່ງໃນໄລຍະຜ່ານມາກຳມາທິການມີຜົນງານທີ່ພົ້ນເດັ່ນຫລາຍດ້ານ ນັບແຕ່ກອງປະຊຸມຄັ້ງປະຖົມມະລຶກ ຈົນມາຮອດປະຈຸບັນ ກບຜ ໄດ້ຕັ້ງໜ້າປະຕິບັດໜ້າທີ່ຕາມພາລະບົດບາດທີ່ກຳນົດໄວ້ ເຊິ່ງເປັນການປະກອບສ່ວນອັນໃຫຍ່ຫລວງ ໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ດ້ວຍລັດຖະທຳມະນູນ ແລະ ກົດໝາຍ ຜົນງານດັ່ງກ່າວໄດ້ສະແດງອອກແຕ່ລະດ້ານດັ່ງນີ້:

ດ້ານນິຕິບັນຍັດ: ໄດ້ສຳເລັດໂດຍພື້ນຖານໃນການປັບປຸງ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 062/ຄປຈ, ວ່າດ້ວຍກົນໄກປະສານງານ ລະຫວ່າງກຳມາທິການບັນດາເຜົ່າຂອງສະພາແຫ່ງຊາດກັບບັນດາຂະແໜງການ-ອົງການກ່ຽວຂ້ອງ; ຂໍ້ຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 01/ຄປຈ, ວ່າດ້ວຍການພົວພັນ ລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ກັບຄະນະປະຈຳສູນກາງແນວລາວສ້າງຊາດ; ໄດ້ປະກອບບຸກຄະລາກອນ 2 ທ່ານ ເຂົ້າຮ່ວມເປັນຄະນະສ້າງ, ຮ່າງກົດໝາຍວ່າດ້ວຍເຢົາວະຊົນ-ອານຸຊົນ ພ້ອມທັງໄດ້ເຂົ້າຮ່ວມປະກອບຄຳເຫັນຕໍ່ຮ່າງກົດໝາຍດັ່ງກ່າວ 1 ຄັ້ງ ແລະ ເຂົ້າຮ່ວມປະຊຸມຖອດຖອນບົດຮຽນ ແລະ ປັບປຸງກົດໝາຍ, ການຍົກເວັ້ນການປະຕິບັດກົດໝາຍບາງມາດຕາ ຈຳນວນ 6 ຄັ້ງ.

ດ້ານການຕົກລົງບັນຫາສຳຄັນຂອງຊາດ ແລະ ທ້ອງຖິ່ນ: ປະທານ ກບຜ ເຂົ້າຮ່ວມກອງປະຊຸມຄະນະປະຈຳສະພາແຫ່ງຊາດເປັນປະຈຳທຸກເດືອນ; ເຂົ້າຮ່ວມກອງປະຊຸມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບຄະນະລັດຖະບານ ປະຈຳ 6 ເດືອນຕົ້ນປີ 2022; ສະມາຊິກສະພາແຫ່ງຊາດ ທີ່ເປັນການນຳຂອງ ກບຜ ເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳເຫັນພິຈາລະນາ ແລະ ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂອງກອງປະຊຸມຄັ້ງປະຖົມມະລຶກ, ສະໄໝວິສາມັນ ແລະ ສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ພ້ອມທັງພົບປະຜູ້ມີສິດເລືອກຕັ້ງ ແລະ ເຄື່ອນໄຫວເຜີຍແຜ່ເນື້ອໃນຂອງກອງປະຊຸມດັ່ງກ່າວ ຢູ່ເຂດເລືອກຕັ້ງຂອງຕົນ;

ດ້ານການປະຕິບັດພາລະບົດບາດຕິດຕາມກວດກາ: ສຳເລັດການຈັດກອງປະຊຸມລະຫວ່າງ ກບຜ ແລະ ພາກສ່ວນກ່ຽວຂ້ອງກ່ຽວກັບຜົນການຕິດຕາມກວດກາ ປະຈຳປີ 2021 ຂອງກຳມາທິການບັນດາເຜົ່າ; ເຂົ້າຮ່ວມຕິດຕາມກວດກາກັບຄະນະທ່ານປະທານສະພາແຫ່ງຊາດເຄື່ອນໄຫວວຽກງານຢູ່ແຂວງບໍລິຄຳໄຊ; ເຂົ້າຮ່ວມຄະນະຕິດຕາມການຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ຢູ່ແຂວງອຸດົມໄຊ, ຫລວງພະບາງ, ວຽງຈັນ ແລະ ນະຄອນຫລວງວຽງຈັນ; ຕິດຕາມກວດກາຕາມຄຳຮ້ອງທຸກຂອງປະຊາຊົນ ກ່ຽວກັບການແກ້ໄຂຜົນກະທົບຈາກໂຄງການພັດທະນາກໍ່ສ້າງເຂື່ອນນ້ຳຊຳ 1A; ຄະນະນຳກຳມາທິການ, ຄະນະກົມ ແລະ ວິຊາການ ຈຳນວນ 5 ທ່ານ (ຍິງ 3 ທ່ານ) ໄດ້ປະກອບເປັນຄະນະ ແລະ ເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ແຂວງຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ອັດຕະປື.

ການສ້າງຄວາມເຂັ້ມແຂງໃຫ້ແກ່ກຳມາທິການ: ໄດ້ສຳເລັດການຈັດກອງປະຊຸມສຳມະນາຄວາມຮູ້ພື້ນຖານ ກ່ຽວກັບວຽກງານຊົນເຜົ່າ ແລະ ສາສະໜາ ທີ່ແຂວງສະຫວັນນະເຂດ ແລະ ແຂວງວຽງຈັນ ມີຜູ້ເຂົ້າຮ່ວມທັງໝົດ 148 ທ່ານ (ຍິງ 39 ທ່ານ); ເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບຄວາມຕ້ອງການໃນການນຳໃຊ້ຂໍ້ມູນເຂົ້າໃນການສ້າງແຜນທີ່ ແລະ ແຜນໃນການວິໄຈຄວາມທຸກຍາກດ້ວຍລະບົບແຜນທີ່ຂອງ ສປປລາວ; ກອງປະຊຸມຕີລາຄາການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດແລະລຶບລ້າງຄວາມທຸກຍາກ ປີ 2021 ແລະ ທິດທາງແຜນການປີ 2022; ນອກນັ້ນ, ຍັງໄດ້ພົວພັນປະສານງານກັບບາງເຂດເລືອກຕັ້ງ ເພື່ອເກັບກຳຂໍ້ມູນກ່ຽວກັບການຊົດເຊີຍຜົນກະທົບຈາກໂຄງການລົດໄຟລາວ-ຈີນ; ສຳເລັດການສົ່ງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມວຽກງານສາສະໜາ ໃຫ້ 16 ກົມກອງກະຊວງອ້ອມຂ້າງສູນກາງທີ່ກ່ຽວຂ້ອງ ແລະ ເຂດເລືອກຕັ້ງ 18 ເຂດ ແລະ ປະສານສົມທົບກັບສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ກະກຽມບົດປະກອບຄຳເຫັນທີ່ຕີລາຄາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX.

ວຽກງານການຕ່າງປະເທດ: ໄດ້ກະກຽມແຜນຮັບຕ້ອນຄະນະຜູ້ຂັ້ນສູງຂອງສະພາແຫ່ງຊາດ ສສ.ຫວຽດນາມ ພົບປະສອງຝ່າຍ ແລະ ເຊັນ MOU ກັບຄະນະຜູ້ແທນສະພາຊົນຊາດສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ແລະ ຄະນະນຳກຳມາທິການ ເຂົ້າຮ່ວມໃນຄະນະຕ້ອນຮັບຄະນະທູດມິດຕະພາບລາວ ແລະ ເກົາຫລີ ພິທີພົບປະລະຫວ່າງກຳມາທິການການຕ່າງປະເທດກັບຜູ້ຕາງໜ້າອົງການອາຫານ ແລະ ກະສິກຳ ຂອງສະຫະປະຊາຊາດ (FAO) ປະຈຳລາວ ທີ່ສະພາແຫ່ງຊາດ. ນອກຈາກການເຄື່ອນໄຫວວຽກງານຕາມພາລະບົດບາດຂອງກຳມາທິການແລ້ວ, ກບຜ ພ້ອມດ້ວຍພະນັກງານທີ່ເປັນເສນາທິການໄດ້ເຂົ້າຮ່ວມການເຄື່ອນໄຫວວຽກງານອື່ນທີ່ກ່ຽວຂ້ອງຕາມການເຊີນ ໂດຍສະເພາະໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ສຳມະນາໃນຫົວຂໍ້ຕ່າງໆທີ່ສະພາແຫ່ງຊາດຈັດຂຶ້ນ.

ພ້ອມນັ້ນ, ທ່ານຍັງໃຫ້ຮູ້ກ່ຽວກັບເປົ້າໝາຍຈຸດສຸມໃນການຈັດຕັ້ງປະຕິບັດ 6 ເດືອນທ້າຍປີ 2022 ແມ່ນຈະສືບຕໍ່ຈັດຕັ້ງປະຕິບັດວຽກງານໃນແຕ່ລະດ້ານໃຫ້ສຳເລັດ ເຊິ່ງ ກບຜ ໄດ້ວາງແຜນການເຄື່ອນໄຫວ ແລະ ສືບຕໍ່ແຜນທີ່ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ເຂົ້າໃນແຜນການ 6 ເດືອນທ້າຍປີ ເຊິ່ງຈະໄດ້ສືບຕໍ່ຊຸກຍູ້ບັນດາຂະແໜງການ ແລະ ອົງການຂະແໜງການທີ່ກ່ຽວຂ້ອງສ້າງ-ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເປັນຕົ້ນຮ່າງກົດໝາຍວ່າດ້ວຍອານຸຊົນ-ເຢົາວະຊົນທັນວາ, ກົດໝາຍວ່າດ້ວຍການຄຸ້ມຄອງ ແລະ ການປົກປ້ອງການເຄື່ອນໄຫວສາສະໜາ, ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ກົດໝາຍວ່າດ້ວຍທີ່ຢູ່ອາໄສ, ກົດໝາຍວ່າດ້ວຍສະຫະພັນແມ່ຍິງ, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ແລະ ນິຕິກຳອື່ນໆ ພ້ອມທັງຕິດຕາມການເຜີຍແຜ່ເອກະສານດັ່ງກ່າວໃຫ້ກວ້າງຂວາງ; ການກະກຽມເອກະສານຕ່າງໆ ທີ່ຈະນຳມາຜ່ານກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກໍຄືການກະກຽມເນື້ອໃນໃຫ້ແກ່ກອງປະຊຸມ, ເຂົ້າຮ່ວມພິຈາລະນາ, ຮັບຮອງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ເຂົ້າມາຜ່ານກອງປະຊຸມສະໄໝສາມັນເທື່ອທີ 3-4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສືບຕໍ່ນຳສະເໜີປະທານຄະນະປະຈຳສະພາແຫງຊາດ ຮັບຮອງມະຕິ 062/ຄປຈ ແລະ ຂໍ້ຕົກລົງເລກທີ 01/ຄປຈ ສະບັບປັບປຸງ ພ້ອມທັງເຜີຍແຜ່ໃຫ້ບັນດາຂະແໜງການ ແລະ ອົງການທີ່ກ່ຽວຂ້ອງໄດ້ຮັບຮູ້ ແລະ ເຂົ້າໃຈຕໍ່ກັບເນື້ອໃນເອກະສານດັ່ງກ່າວ; ສ່ວນດ້ານການຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແມ່ນສືບຕໍ່ເຂົ້າຮ່ວມກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນເທື່ອ 3-4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເພື່ອຄົ້ນຄວ້າ, ພິຈາລະນາ, ຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ທ້ອງຖິ່ນ ເປັນຕົ້ນ: ບັນດາກົດໝາຍ, ແຜນການພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການຕ່າງໆລະດັບຊາດ ແລະ ບັນຫາອື່ນໆ ທີ່ນຳເຂົ້າຜ່ານໃນກອງປະຊຸມ ພ້ອມທັງຂຶ້ນແຜນເຜີຍແຜ່ຜົນສຳເລັດກອງປະຊຸມດັ່ງກ່າວ.

ໃນຕອນທ້າຍ, ທ່ານຍັງໄດ້ກ່າວຕື່ມອີກວ່າ: ສຳລັບດ້ານການຕິດຕາມກວດກາ ແມ່ນຄະນະນຳ ກບຜ ລົງຕິດຕາມກວດກາການຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ເຂົ້າສູ່ວຽກງານຕົວຈິງຢູ່ທ້ອງຖິ່ນ ໂດຍສະເພາະການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ການປົກຄອງທ້ອງຖິ່ນ, ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່, ສ້າງບ້ານພັດທະນາ, ວຽກງານ 3 ສ້າງ, ໂຄງການລົງທຶນ ແລະ ການພັດທະນາທີ່ມີຜົນກະທົບຕໍ່ປະຊາຊົນບັນດາເຜົ່າ ເປັນຕົ້ນຢູ່ແຂວງຫລວງນ້ຳທາ, ໄຊຍະບູລີ, ບໍລິຄຳໄຊ, ວຽງຈັນ ແລະ ອັດຕະປື; ຈັດກອງປະຊຸມຄົບຄະນະປະຈຳປີ 2022 ຂອງ ກບຜ; ຈັດກອງປະຊຸມແຈ້ງຜົນການຕິດຕາມກວດກາ ຂອງ ກບຜ ໃຫ້ບັນດາຂະແໜງການ ແລະ ອົງການກ່ຽວຂ້ອງຮັບຮູ້ ແລ້ວນຳເອົາຜົນດັ່ງກ່າວໄປແກ້ໄຂຕາມພາລະບົດບາດຂອງຕົນ; ສືບຕໍ່ຕິດຕາມກວດກາການຈັດຕັ້ງປະຕິບັດ ດຳລັດເລກທີ 207/ລບ ກ່ຽວກັບການເຄື່ອນໄຫວວຽກງານຂົງເຂດບັນດາເຜົ່າ, ຊຸກຍູ້ພາກສ່ວນກ່ຽວຂ້ອງເກັບກຳສະຖິຕິຊົນເຜົ່າ ແລະ ບັນຫາພົ້ນເດັ່ນໃນຂົງເຂດວຽກງານຊົນເຜົ່າ; ສືບຕໍ່ຕິດຕາມກວດກາການຈັດຕັ້ງປະຕິບັດນິຕິກຳໃນຂົງເຂດສາສະໜາ ໂດຍສະເພາະດຳລັດ 315/ລບ ເພື່ອຊອກໃຫ້ເຫັນດ້ານດີພົ້ນເດັ່ນ, ດ້ານອ່ອນທີ່ຍັງຄົງຄ້າງ, ສາເຫດ ແລະ ວິທີການແກ້ໄຂ ໂດຍປະສານສົມທົບປຶກສາຫາລືອົງການບໍລິຫານລັດ ແລະ ຂະແໜງການກ່ຽວຂ້ອງຢ່າງກົມກຽວ.

## ກອງປະຊຸມ...

(ສພຊ) ວັນທີ 24 ມິຖຸນາ ຜ່ານມາ, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສະພາທີ່ປຶກສາຂອງໄອປາກ່ຽວກັບໄພອັນຕະລາຍຂອງຢາເສບຕິດ (The 5th Meeting of the AIPA Advisory Council on Dangerous Drug-AIPACODD) ຄັ້ງທີ 5 (ໃນຮູບແບບກອງປະຊຸມທາງໄກ) ເຊິ່ງຈັດໂດຍສະພາແຫ່ງຊາດແຫ່ງຣາຊະອານາຈັກກຳປູເຈຍ ໃນຖານະເປັນປະທານສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ໂດຍການເຂົ້າຮ່ວມຂອງບັນດາສະມາຊິກສະພາແຫ່ງຊາດຈາກປະເທດສະມາຊິກອາຊຽນ AIPA, ຜູ້ຕາງໜ້າຈາກອົງການສະຫະປະຊາຊາດປະຈຳພາກພື້ນກ່ຽວກັບຢາເສບຕິດ ແລະ ອາດຊະຍາກຳ (UNODC), ຜູ້ຕາງໜ້າຈາກເຈົ້າໜ້າທີ່ອາວຸໂສອາຊຽນ ກ່ຽວກັບຢາເສບຕິດ ASOD, ເລຂາທິການໃຫຍ່ໄອປາ ແລະ ກອງເລຂາໄອປາ.

ຄະນະຜູ້ແທນກອງປະຊຸມໄດ້ຮ່ວມກັນປຶກສາຫາລື ແລະ ແລກປ່ຽນຂໍ້ມູນ-ຂ່າວສານ ກ່ຽວກັບມາດຕະການໃນການຄວບຄຸມຢາເສບຕິດພາຍໃນປະເທດຂອງຕົນ, ສິ່ງທ້າທາຍທີ່ເກີດຂຶ້ນຈາກການດຳເນີນຄະດີ, ການຍຶດຢາເສບຕິດ ແລະ ການນຳໃຊ້ມາດຕະການໃນໄລຍະການແຜ່ລະບາດພະຍາດ Covid-19 ເຊິ່ງໄດ້ສົ່ງຜົນກະທົບອັນໜັກໜ່ວງຕໍ່ພາກພື້ນ ແລະ ສາກົນ ໄດ້ແລກປ່ຽນແນວທາງ, ວິທີການໃນການເພີ່ມທະວີການຮ່ວມມືກັນເພື່ອຕ້ານໄພຂົ່ມຂູ່ຈາກຢາເສບຕິດ.

ກອງປະຊຸມຄັ້ງນີ້, ຍັງໄດ້ຮັບຮອງເອົາມະຕິວ່າດ້ວຍການຄວບຄຸມ ແລະ ຮັບມືກັບສິ່ງທ້າທາຍໃນປັດຈຸບັນ ເພື່ອກ້າວໄປສູ່ປະຊາຄົມອາຊຽນທີ່ປອດຢາເສບຕິດ ໂດຍການສົ່ງເສີມການຮ່ວມມືສອງຝ່າຍ, ການຮ່ວມມືພາກພື້ນ ແລະ ສາກົນ ຜ່ານການແລກປ່ຽນຂໍ້ມູນ-ຂ່າວສານ, ການຮ່ວມມືຜ່ານແດນ, ການຈັດຕັ້ງປະຕິບັດບັນດາໂຄງການ ແລະ ແຜນງານຕ່າງໆ ຕາມທີ່ໄດ້ລະບຸໄວ້ໃນແຜນປະຊາຄົມການເມືອງ-ຄວາມໝັ້ນຄົງອາຊຽນ 2025 ເພື່ອແນໃສ່ຕ້ານການຄ້າຢາເສບຕິດ ແລະ ອາຊະຍາກຳທີ່ກ່ຽວຂ້ອງ ໂດຍການເສີມຂະຫຍາຍບົດບາດຂອງຂະແໜງການອາຊຽນ, ການຊ່ວຍເຫລືອທາງດ້ານເຕັກນິກ ແລະ ປັບປຸງນິຕິກຳຕ່າງໆທີ່ກ່ຽວຂ້ອງກັບການຄວບຄຸມຢາເສບຕິດໃນພາກພື້ນ ແລະ ໃນໂລກ ໃຫ້ມີປະສິດທິຜົນກວ່າເກົ່າ ໂດຍສະເພາະໄລຍະການແຜ່ລະບາດຂອງພະຍາດ Covid-19. ມະຕິສະບັບດັ່ງກ່າວຈະໄດ້ນຳໄປສະເໜີຕໍ່ກອງປະຊຸມໃຫຍ່ AIPA ຄັ້ງທີ 43 ທີ່ຣາຊະອານາຈັກກຳປູເຈຍ ໃນທ້າຍປີ 2022 ນີ້.

(ກົງທະນູຄຳ ພິພັດເສລີ)

# 6 ເດືອນຕົ້ນປີ 2022 GDP ຂະຫຍາຍຕົວ 4,3%

ອ່ານຕໍ່ສະບັບກ່ອນ...

4) ສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຕາມ 7 ນະໂຍບາຍຂອງແຜນພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍສະເພາະສຸມໃສ່ພັດທະນາບັນດາວິສາຫະກິດທີ່ຜະລິດສິນຄ້າເພື່ອສົ່ງອອກ ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບຕ່າງປະເທດເທື່ອລະກ້າວ;

5) ສືບຕໍ່ປັບປຸງເນື້ອໃນໂຄສະນາ ເພື່ອດຶງດູດນັກທ່ອງທ່ຽວຈາກຕ່າງປະເທດ ຜ່ານຊ່ອງທາງຕ່າງໆ ໄປຄຽງຄູ່ກັບການສົ່ງເສີມການທ່ອງທ່ຽວພາຍໃນ, ສຸມໃສ່ປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານ-ວັດຖຸເຕັກນິກ ແລະ ການບໍລິການ ເພື່ອໃຫ້ສາມາດດຶງດູດການທ່ອງທ່ຽວຫລາຍຂຶ້ນ.

(3) ສືບຕໍ່ເລັ່ງໃສ່ປະຕິຮູບກົນໄກ ແລະ ເຄື່ອງມືໃນການຄຸ້ມຄອງການເກັບລາຍຮັບ-ລາຍຈ່າຍງົບປະມານ ໃຫ້ມີປະສິດທິພາບກວ່າເກົ່າ:

1) ເລັ່ງໃສ່ຂະຫຍາຍເຄື່ອງມືທັນສະໄໝເຂົ້າໃນການຄຸ້ມຄອງ ແລະ ຈັດເກັບລາຍຮັບໃນຂະແໜງການເງິນ ໃຫ້ກວມເອົາ 80% ໃນຂອບເຂດທົ່ວປະເທດ, ຊຸກຍູ້ທຸກຫົວໜ່ວຍທຸລະກິດຖືບັນຊີ ແລະ ເຂົ້າລະບົບ TaxRIS, ເລັ່ງປັບປຸງກົນໄກການເກັບລາຍຮັບທີ່ໝັ້ນຄົງ ຈາກອາກອນທີ່ດິນ, ອາກອນຊັບສິນ ແລະ ອື່ນໆ ໃຫ້ມີປະສິດທິພາບກວ່າເກົ່າ; ສືບຕໍ່ຂຸດຄົ້ນແຫລ່ງລາຍຮັບຈາກທຸກແຫລ່ງ ລວມທັງເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມລັດຖະບັດຍັດ 002/ປປທ ໃຫ້ຄົບຖ້ວນ.

2) ສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງເລກທີ 18/ນຍ ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫລຂອງລາຍຮັບງົບປະມານແຫ່ງລັດ, ຄຸ້ມຄອງລາຍຈ່າຍຕ່າງໆໃຫ້ມີຄວາມຮັດກຸມຕາມທິດປະຢັດ ແລະ ຕ້ານການຟຸມເຟືອຍ.

3) ສືບຕໍ່ຄົ້ນຄວ້າແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ຕາມ 6 ຮູບແບບທີ່ຄະນະແກ້ໄຂໜີ້ສິນທັງພາຍໃນແລະຕ່າງປະເທດໄດ້ຮັບຮອງແລ້ວ, ໃນນີ້ ເລັ່ງໃສ່ຮູບແບບການແກ້ໄຂໜີ້ດ້ວຍວິທີການຫັນໜີ້ເປັນທຶນ ໂດຍການຫັນເອົາບັນດາໂຄງການລົງທຶນຂອງລັດທີ່ມີເງື່ອນໄຂດຳເນີນໃນຮູບແບບທຸລະກິດເກັບຄ່າເຊົ່າສຳປະທານ ແລະ ພັນທະຕ່າງໆ ເພື່ອຊຳລະໂຄງການ.

**2. ເປົ້າໝາຍທີ 2:** ຊັບພະຍາກອນມະນຸດມີຄຸນນະພາບສູງຂຶ້ນ.

1) ສືບຕໍ່ຈັດຕັ້ງການຮຽນການສອນໃຫ້ຄົບຕາມຫລັກສູດ ພ້ອມທັງດຳເນີນການປະເມີນເອົາຄະແນນສະສົມໃຫ້ນັກຮຽນເພື່ອເລື່ອນຂັ້ນ ແລະ ກະກຽມສອບເສັງຈົບຊັ້ນໃຫ້ແກ່ນັກຮຽນ-ນັກສຶກສາ; ສູ້ຊົນປະຕິບັດຄາດໝາຍທີ່ຄາດວ່າຈະບໍ່ບັນລຸຕາມແຜນ ດ້ວຍການສືບຕໍ່ປັບປຸງ ແລະ ພັດທະນາຫລັກສູດການຮຽນ-ການສອນ, ພ້ອມທັງສະໜອງໂຄງລ່າງພື້ນຖານ ແລະ ສື່ການຮຽນການສອນ ແລະ ເຝິກອົບຮົມໃຫ້ແກ່ຄູ-ອາຈານ.

2) ສືບຕໍ່ສຸມໃສ່ຄວບຄຸມ, ເຝົ້າລະວັງ ແລະ ຕອບໂຕ້ການແຜ່ລະບາດໂຄວິດ-19 ຢ່າງຕັ້ງໜ້າ ດ້ວຍມາດຕະການຕ່າງໆທີ່ສອດຄ່ອງ, ພ້ອມທັງໂຄສະນາໃຫ້ສັງຄົມ ຫັນໄປສູ່ການດຳລົງຊີວິດແບບໃໝ່.

3) ສູ້ຊົນປະຕິບັດບັນດາຄາດໝາຍທີ່ຄາດວ່າຈະບໍ່ບັນລຸຕາມແຜນ ຂອງຂະແໜງສາທາລະນະສຸກໃຫ້ໄດ້ຕາມແຜນທີ່ກຳນົດໄວ້; ໃນນີ້, ສຸມໃສ່ວຽກງານບໍລິການສຸຂະພາບແມ່ ແລະ ເດັກ, ສັກຢາວັກຊີນກັນພະຍາດ, ປະຕິບັດຍຸດທະສາດໂພຊະນາການແບບເຊື່ອມສານ; ຂະຫຍາຍການບໍລິການສາທາລະນະສຸກຢູ່ຂັ້ນທ້ອງຖິ່ນໃຫ້ກວ້າງຂວາງມີຄຸນນະພາບ ແລະ ວຽກອື່ນໆ.

4) ເລັ່ງໃສ່ແກ້ໄຂບັນຫາການວ່າງງານ ໂດຍການເຝິກ ແລະ ພັດທະນາສີມືແຮງງານ ໃຫ້ມີຄຸນນະພາບ, ຈັດຫາວຽກເຮັດງານທຳ ໂດຍມີການສົມທົບລະຫວ່າງການຈັດສົ່ງຢູ່ພາຍໃນ ແລະ ສົ່ງໄປອອກແຮງງານຢູ່ຕ່າງປະເທດ;

**3. ເປົ້າໝາຍທີ 3:** ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ.

1) ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ໂດຍເລັ່ງໃສ່ພັດທະນາເຂດຈຸດສຸມລັດຖະບານ ແລະ ທ້ອງຖິ່ນ ດ້ວຍການສະໜອງໂຄງລ່າງພື້ນຖານ ແລະ ວິຊາການ-ເຕັກນິກທີ່ຈຳເປັນ ເພື່ອຊຸກຍູ້ການຜະລິດ ຕິດພັນກັບການປຸງແຕ່ງ ຕິດພັນກັບການຕະຫລາດ.

**4. ເປົ້າໝາຍທີ 4:** ປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດຸນ.

1) ສືບຕໍ່ສຸມໃສ່ສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ໃຫ້ສຳເລັດຕື່ມ ຈຳນວນ 2 ແຂວງ; ສືບຕໍ່ສ້າງໜ່ວຍງານປະຕິບັດງານອອກໃບຕາດິນຢູ່ພາກສະໜາມແລະຂຶ້ນທະບຽນອອກໃບຕາດິນໃຫ້ສຳເລັດຕາມແຜນກຳນົດໄວ້.

2) ສຸມໃສ່ປັບປຸງ ແລະ ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມ, ອຸທົກກະສາດ ແລະ ລະບົບເຕືອນໄພລ່ວງໜ້າ, ພ້ອມທັງຍົກລະດັບຄຸນນະພາບຂອງການລາຍງານ, ການແຈ້ງເຕືອນສະພາບອາກາດ ຢ່າງທັນການເພື່ອຫລຸດຜ່ອນຜົນກະທົບຈາກໄພພິບັດທຳມະຊາດທີ່ຈະເກີດຂຶ້ນໃນລະດູຝົນ.

3) ສືບຕໍ່ຊຸກຍູ້ການຜະລິດກະສິກຳປອດສານພິດ ແລະ ກະສິກຳສະອາດ ໃຫ້ມີການຂະຫຍາຍຕົວຢ່າງກວ້າງຂວາງ ເພື່ອຫລຸດຜ່ອນຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

**5. ເປົ້າໝາຍທີ 5:** ການສ້າງໂຄງລ່າງພື້ນຖານທີ່ມີຄວາມເຂັ້ມແຂງ, ນຳໃຊ້ທ່າແຮງ, ກາລະໂອກາດທີ່ຕັ້ງໃນການຮ່ວມມື ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

1) ສຸມໃສ່ປະຕິບັດໂຄງການກໍ່ສ້າງເສັ້ນທາງຕ່າງໆ, ທາງລົດໄຟ ລາວ-ໄທ ລວມທັງເສັ້ນທາງເຂົ້າສູ່ສະຖານີ ແລະ ທ່າບົກ ຕາມແລວທາງເສດຖະກິດຕ່າງໆໃຫ້ໄປຕາມແຜນກຳນົດ; ຮັບປະກັນບັນດາເສັ້ນທາງເຊື່ອມຕໍ່ແຂວງຫາເມືອງ, ເສັ້ນທາງເຂົ້າຫາເຂດການຜະລິດ ໃຫ້ສາມາດທຽວໄດ້ຢ່າງເປັນປົກກະຕິ.

2) ເພີ່ມທະວີການຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ ແລະ ການພົວພັນຮ່ວມມືກັບຕ່າງປະເທດ ທີ່ລາວເຮົາເປັນພາຄີຢ່າງສະເໝີຕົ້ນສະເໝີປາຍ; ພ້ອມນີ້, ກໍ່ສືບຕໍ່ຊຸກຍູ້ການເຄື່ອນໄຫວສ້າງຂະບວນການຕ່າງໆ ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນການທູດຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ ຄົບຮອບ 45 ປີ ໃນປີ 2022 ໃຫ້ເປັນຂະບວນການຢ່າງຟົດຟື້ນ.

6. ເປົ້າໝາຍທີ 6: ການຄຸ້ມຄອງ-ບໍລິຫານລັດມີປະສິດທິພາບ.

1) ສືບຕໍ່ປັບປຸງການຄຸ້ມຄອງ ແລະ ບໍລິຫານລັດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ໂປ່ງໃສ ໂດຍເລັ່ງແກ້ໄຂບັນດາຂອດຂັ້ນທີ່ບໍ່ເອື້ອອຳນວຍຕໍ່ການດຳເນີນທຸລະກິດ ແລະ ການລົງທຶນ; ສືບຕໍ່ສ້າງ ແລະ ປັບປຸງກົດໝາຍໃຫ້ໄດ້ 4 ກົດໝາຍ ຕາມແຜນການ, ຮັບຮອງ 10 ດຳລັດຂອງລັດຖະບານ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍຢ່າງແຂງແຮງ ໂດຍສະເພາະສູ້ຊົນຫັນເອົາການປະຕິບັດຄຳຕັດສິນຂອງສານໃຫ້ຂຶ້ນຕາມສາຍຕັ້ງໃນຂອບເຂດທົ່ວປະເທດ ໃຫ້ສຳເລັດຕາມກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ປັບປຸງ 2021) ແລະ ການແກ້ໄຂບັນຫາຄວາມຫຍຸ້ງຍາກໃນການປະຕິບັດຄາຕັດສິນຂອງສານ.

2) ພັດທະນາແມ່ຍິງ, ໄວໜຸ່ມ ໃຫ້ມີຄວາມຮູ້ຄວາມສາມາດ ເພື່ອປະກອບອາຊີບທີ່ໝັ້ນຄົງ, ສືບຕໍ່ສົ່ງເສີມຄວາມກ້າວໜ້າແມ່ຍິງ, ຄວາມສະເໝີພາບຍິງ-ຊາຍ, ການປົກປ້ອງສິດທິເດັກ.

3) ສືບຕໍ່ສ້າງເງື່ອນໄຂໃຫ້ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ ໃຫ້ສາມາດເຄື່ອນໄຫວຕາມແຜນງານ, ໂຄງການ ທີ່ກຳນົດໄວ້.

4) ກະກຽມຄວາມພ້ອມໃຫ້ແກ່ການສະຫລຸບຕີລາຄາວຽກງານພັດທະນາຊົນນະບົດ, ວຽກງານ 3 ສ້າງ, ການແຂ່ງຂັນຮັກຊາດ ແລະ ພັດທະນາ ຕາມແຜນທີ່ກຳນົດໄວ້ ໂດຍໃຫ້ສາມາດດຳເນີນກອງປະຊຸມໃນທ້າຍ ປີ 2022.

5) ສືບຕໍ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ພັກດ້ວຍມາດຕະການຕ່າງໆຢ່າງຕັ້ງໜ້າ ແນໃສ່ເຮັດໃຫ້ປະເທດຊາດສືບຕໍ່ມີຄວາມສະຖຽນລະພາບທາງການເມືອງ-ສັງຄົມ, ມີຄວາມເປັນລະບຽບຮຽບຮ້ອຍທີ່ໜັກແໜ້ນ.

**III. ກົນໄກ ແລະ ມາດຕະການຈັດຕັ້ງປະຕິບັດ.**

- ແຕ່ລະຂະແໜງການ, ອົງການ ແລະ ທ້ອງຖິ່ນໃນທົ່ວປະເທດ ຕ້ອງໄດ້ຈັດຕັ້ງເຊື່ອມຊຶມ, ເຜີຍແຜ່ແຜນພັດທະນາເສດຖະກິດ-ສັງຄົມ ໂດຍຕິດພັນກັບການຜັນຂະຫຍາຍໃຫ້ເປັນແຜນລະອຽດຕາມບົດບາດໜ້າທີ່ຂອງແຕ່ລະພາກສ່ວນ ທັງໃຫ້ຕິດແທດຕົວຈິງກວ່າເກົ່າ;
- ເພີ່ມທະວີຄວາມຮັບຜິດຊອບ ແລະ ເຮັດແທ້ທຳຈິງ ຂອງຄະນະນຳແຕ່ລະຂັ້ນ ໃຫ້ສູງຂຶ້ນກວ່າເກົ່າ;
- ສືບຕໍ່ປັບປຸງກົນໄກການປະສານງານໃຫ້ມີຄວາມລະອຽດ, ຈະແຈ້ງ ແລະ ຄ່ອງຕົວກວ່າເກົ່າເພື່ອຈັດຕັ້ງປະຕິບັດວຽກງານຕ່າງໆໃຫ້ໄປລວງດຽວກັນ;
- ສືບຕໍ່ປັບປຸງຖານຂໍ້ມູນສະຖິຕິຢູ່ຂະແໜງການ, ອົງການ ແລະ ທ້ອງຖິ່ນໃຫ້ເປັນລະບົບ, ມີຄວາມຖືກຕ້ອງຊັດເຈນ ແລະ ຕອບສະໜອງໄດ້ທັນເວລາ.
- ເພີ່ມທະວີການຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຕ່າງໆ, ແກ້ໄຂບັນຫາທີ່ເກີດຂຶ້ນໃຫ້ທັນກຳນົດເວລາ, ທັງສະຫລຸບລາຍງານໃຫ້ຂັ້ນເທິງກ່ຽວຂ້ອງ ເປັນແຕ່ລະໄລຍະຢ່າງເປັນປົກກະຕິ.

**IV. ຂໍ້ສະເໜີ**

ສະເໜີກອງປະຊຸມສະພາແຫ່ງຊາດຄັ້ງນີ້ ພິຈາລະນາດັດແກ້ຄາດໝາຍດ້ານເງິນຕາຈຳນວນໜຶ່ງຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022, ເຊິ່ງລາຍລະອຽດທະນາຄານ ແຫ່ງ ສປປລາວ ຈະລາຍງານຕໍ່ກອງປະຊຸມ.

## ຮູ້ຈັກ...




ຕ່າງໆອີກ 17 ອົງການ. 71 ໄອພີຢູເຄື່ອນໄຫວຢ່າງໃກ້ຊິດຕິດແທດກັບອົງການສະຫະປະຊາຊາດ (ສປຊ) ກໍຄືບັນດາອົງການຈັດຕັ້ງສາກົນໃນຂອບຂອງອົງການສະຫະປະຊາຊາດ. ສະພາແຫ່ງຊາດລາວຂອງພວກເຮົາໄດ້ຖືກຮັບເຂົ້າມາເປັນສະມາຊິກຂອງອົງການໄອພີຢູ ໃນວັນທີ 4 ເມສາ 1990 ຢູ່ກອງປະຊຸມໄອພີຢູ ຄັ້ງທີ 83 ທີ່ນະຄອນຫລວງນິໂກເຊຍ ປະເທດໄຊປຼັດສ໌ (Nicosia, Cyprus); ຫົວໜ້າຄະນະຜູ້ແທນລາວໃນເວລານັ້ນແມ່ນທ່ານ ຈະເລີນ ເຍຍປາວເຮີ ກຳມະການຄະນະປະຈຳ ທັງເປັນປະທານຄະນະສະຫະພັນລັດຖະສະພາສາກົນ, ສະພາປະຊາຊົນສູງສຸດ ຊຸດທີ II. ການທີ່ໄອພີຢູຈະຮັບຮອງເອົາສະພາແຫ່ງຊາດລາວພວກເຮົາເຂົ້າເປັນສະມາຊິກສົມບູນນັ້ນ ໄດ້ຢັ້ງຢືນໃຫ້ເຫັນຄວາມເຊື່ອໝັ້ນຂອງອົງການດັ່ງກ່າວຕໍ່ລະບົບການເລືອກຕັ້ງທີ່ເປັນປະຊາທິປະໄຕ, ເສລີ ແລະ ຍຸຕິທຳ ໃນ ສປປລາວ.

ມາຮອດປັດຈຸບັນ, ເວົ້າໄດ້ວ່າໄອພີຢູເປັນເວທີອັນກວ້າງໃຫຍ່ໄພສານທີ່ເຕົ້າໂຮມຄວາມເປັນປຶກແຜ່ນຂອງບັນດາລັດຖະສະພາ-ສະມາຊິກລັດຖະສະພາໃນທົ່ວໂລກ ເພື່ອພາລະກິດຕໍ່ສູ້ເພື່ອສັນຕິພາບ, ປະຊາທິປະໄຕ, ສິດທິມະນຸດ, ການພັດທະນາທີ່ຍືນຍົງ ທັງເປັນເວທີແລກປ່ຽນບົດຮຽນກ່ຽວກັບວຽກງານລັດຖະສະພາ, ຫລັກການເລືອກຕັ້ງທີ່ເປັນປະຊາທິປະໄຕເສລີ ແລະ ຍຸຕິທຳ ພ້ອມທັງສ້າງຄວາມເຂັ້ມແຂງດ້ວຍການປົກຄອງດ້ວຍກົດໝາຍ.

ໄອພີຢູ ມີລະບົບປະຊຸມ 2 ຄັ້ງຕໍ່ປີ ໂດຍການເປັນເຈົ້າພາບຂອງລັດຖະສະພາປະເທດສະມາຊິກທີ່ມີເງື່ອນໄຂ; ນອກຈາກນັ້ນ, ຍັງເປັນເຈົ້າການຈັດກອງປະຊຸມເພື່ອລົງເລິກບັນຫາສຳຄັນລະດັບໂລກທີ່ຜູ້ແທນປະຊາຊົນມີພັນທະຮູ້-ເຫັນ ແລະ ມີສ່ວນຮ່ວມແກ້ໄຂ ແລະ ສົ່ງເສີມຕະຫລອດ 133 ປີ, ຜ່ານມາໄອພີຢູໄດ້ມີຜົນງານພົ້ນເດັ່ນຫລາຍດ້ານ ໃນບັນດາເປົ້າໝາຍຂອງຕົນຄື: ການສົ່ງເສີມຫລັກການປະຊາທິປະໄຕ, ສົ່ງເສີມພັນທະພາບລະຫວ່າງຊາຍ-ຍິງ ໂດຍເນັ້ນບົດບາດສະເໝີພາບທາງດ້ານການເມືອງຂອງເພດຍິງດ້ວຍການຊຸກຍູ້ໃຫ້ມີຈຳນວນສະມາຊິກລັດຖະສະພາເພດຍິງກວມເອົາ 30% ຂອງຈຳນວນ ສສຊ ຂອງແຕ່ລະປະເທດ, ສົ່ງເສີມສິດທິມະນຸດໂດຍລົງເລິກສິດທິມະນຸດຂອງສະມາຊິກລັດຖະສະພາ, ການປົກຄອງສິດທິເດັກນ້ອຍຈາກການຖືກຂູດຮີດແຮງງານ, ການຂູດຮີດທາງເພດ ແລະ ການຄ້າມະນຸດ. ສ່ວນວຽກບຸລິມະສິດອື່ນໆນັ້ນ ລວມມີບັນຫາຄວາມໝັ້ນຄົງ ແລະ ສະຖຽນລະພາບສາກົນ ແລະ ການພັດທະນາແບບຍືນຍົງ.

ໄອພີຢູ ເຄື່ອນໄຫວເປັນເງົາຕາມຕົວຂອງອົງການ ສປຊ ຈົນຖືກຂະໜານນາມວ່າ ເປັນອົງການ ສປຊ ຝ່າຍລັດຖະສະພາ. ໃນແຕ່ລະປີໃນເວລາດຳເນີນກອງປະຊຸມສະມັດຊາໃຫຍ່ຂອງອົງການ ສປຊ ນັ້ນ ກໍຈະມີກອງປະຊຸມສະເພາະກຸ່ມສະມາຊິກລັດຖະສະພາ ເພື່ອປະກອບຄຳເຫັນ ຫລື ທັດສະນະ ຕໍ່ເນື້ອໃນຂອງກອງປະຊຸມຂອງອົງການ ສປຊ. ນອກຈາກນັ້ນ, ແຕ່ລະ 5 ປີໃດ ໄອພີຢູ ຍັງຈັດໃຫ້ມີກອງປະຊຸມບັນດາປະທານລັດຖະສະພາຈາກທົ່ວໂລກ ຢູ່ສຳນັກງານໃຫຍ່ອົງການ ສປຊ ທີ່ນະຄອນນິວຢອກ ຫລື ທີ່ສຳນັກງານໃຫຍ່ ສປຊ ທີ່ນະຄອນເຊີແນວ.

ໃນປີ 2022 ນີ້ ສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ເຂົ້າເປັນສະມາຊິກໄອພີຢູ ຄົບຮອບ 32 ປີພໍດີ ຕະຫລອດໄລຍະດັ່ງກ່າວ ສະພາແຫ່ງຊາດລາວໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານຂອງໄອພີຢູດ້ວຍການເອົາທັດສະນະ ແລະ ຈຸດຢືນສຳຄັນ ຕໍ່ບັນຫາສຳຄັນລະດັບໂລກ, ການແລກປ່ຽນບົດຮຽນກ່ຽວກັບລະບົບລັດຖະສະພາ, ການສ້າງກົດໝາຍ ແລະ ລະບົບການເລືອກຕັ້ງ ໂດຍຜ່ານເວທີຂອງໄອພີຢູ, ສະພາແຫ່ງຊາດລາວ ໄດ້ເສີມຂະຫຍາຍສາຍພົວພັນມິດຕະພາບກັບລັດຖະສະພາຂອງທຸກໆປະເທດ ທີ່ເປັນສະມາຊິກໄອພີຢູ. ໄອພີຢູໄດ້ຊ່ວຍສະພາແຫ່ງຊາດ ໃນການປັບປຸງຂີດຄວາມສາມາດໃນການເຄື່ອນໄຫວຕາມພາລະບົດບາດຂອງຕົນ ດ້ວຍການປະສານງານຂົນຂວາຍທຶນສ້າງຕັ້ງໂຄງການສົ່ງເສີມຄວາມສາມາດຂຶ້ນ ໃນປີ 1997 ໂດຍການຮ່ວມມືກັນກັບຫ້ອງການຕາງໜ້າອົງການ ສປຊ ເພື່ອການພັດທະນາ(UNDP) ປະຈຳ ສປປລາວ.

ໂຄງການດັ່ງກ່າວ ເປັນຕົວແບບໃນການຮ່ວມມື ລະຫວ່າງສະພາແຫ່ງຊາດພວກເຮົາກັບອົງການ ສປຊ ແລະ ລັດຖະສະພາບັນດາປະເທດເພື່ອນມິດ, ອັນໄດ້ປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ສະພາແຫ່ງຊາດແຫ່ງ ສປປລາວ ຕະຫລອດມາຮອດປັດຈຸບັນ.

# ຮັບຟັງການລາຍງານຜົນການກວດສອບບົດສະຫລຸບຂາດຕົວ ປະຈຳປີ 2021



(ສພຊ) ຕອນເຊົ້າວັນອັງຄານທີ 14 ມິຖຸນາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ), ຄະນະປະຈຳ ສພຂ ອຸດົມໄຊ ໄດ້ຮັບຟັງການລາຍງານການກວດສອບບົດສະຫລຸບຂາດຕົວຂອງການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ຈາກອົງການກວດສອບປະຈຳພາກເໜືອ ໂດຍການເຂົ້າຮ່ວມຂອງທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານ ສພຂ, ມີບັນດາທ່ານຄະນະປະຈຳ ສພຂ, ຫົວໜ້າຂະແໜງ, ວິຊາການຂະແໜງເສດຖະກິດ, ແຜນການ ແລະ ການເງິນ ສພຂ ແລະ ທ່ານ ພອນວິເສດ ຈະເລີນຜົນ ຮອງຫົວໜ້າຄະນະກວດສອບ ແລະ ຄະນະທີມງານຂອງອົງການກວດສອບປະຈຳພາກເໜືອເຂົ້າຮ່ວມ.

ທ່ານ ພອນວິເສດ ຈະເລີນຜົນ ໄດ້ລາຍງານບົດບັນທຶກຜົນການກວດສອບບົດສະຫລຸບຂາດຕົວຂອງການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ຂອງແຂວງອຸດົມໄຊ, ໄດ້ຍົກໃຫ້ເຫັນດ້ານດີຜົນງານ ແລະ ດ້ານອ່ອນຂໍ້ຄົງຄ້າງ ທີ່ຈະສືບຕໍ່ໃນການແກ້ໄຂ, ຜ່ານການກວດຄືນການຈັດຕັ້ງປະຕິບັດບັນດາມາດຕະການ ແລະ ຄຳແນະນຳກວດສອບໃນປີຜ່ານມາ ແລະ ຜົນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021 ເຫັນວ່າບັນດາຫົວໜ່ວຍງົບປະມານທີ່ຖືກກວດສອບ ໄດ້ມີຄວາມພະຍາຍາມໃນການປະຕິບັດໜ້າທີ່ວຽກງານທີ່ຖືກຕ້ອງ, ສອດຄ່ອງກັບລະບຽບ, ກົດໝາຍ ແລະ ບັນດານິຕິກຳຕ່າງໆທາງດ້ານການເງິນ ເປັນຕົ້ນແມ່ນການປະຕິບັດບັນດາລະບຽບຫລັກການທາງດ້ານການຄຸ້ມຄອງງົບປະມານແຫ່ງລັດ ຢ່າງເປັນລະບົບ, ສາມາດສະຫລຸບຖານະການເງິນໄດ້ສຳເລັດຕາມກຳນົດເວລາ ແລະ ໄດ້ເອົາໃຈໃສ່ປັບປຸງແກ້ໄຂຕາມຄຳແນະນຳຂອງຄະນະກວດສອບໄດ້ຮັບຜົນດີ, ຢ່າງມີປະສິດທິພາບ.

ພ້ອມດຽວກັນນີ້, ຫົວໜ່ວຍທີ່ຖືກກວດສອບຍັງຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃນຕໍ່ໜ້າໃຫ້ສຳເລັດຢ່າງຂາດຕົວຕາມມະຕິກອງປະຊຸມ ສພຂ ອຸດົມໄຊ ທີ່ໄດ້ວາງອອກໂດຍມີ 5 ມາດຕະການ ທີ່ປັບປຸງແກ້ໄຂບໍ່ຂາດຕົວ, ຂໍ້ຄົງຄ້າງທີ່ຕິດພັນກັບຄຳແນະນຳຂອງຄະນະກວດສອບປີ 2020 ຜ່ານມາມີ 16 ກໍລະນີ, ໃນນີ້ ໄດ້ຮັບການປັບປຸງແກ້ໄຂແລ້ວມີ 10 ກໍລະນີ, ປັບປຸງແກ້ໄຂບໍ່ຂາດຕົວມີ 4 ກໍລະນີ ແລະ ຍັງບໍ່ໄດ້ຮັບການປັບປຸງແກ້ໄຂມີ 2 ກໍລະນີ. ພ້ອມນັ້ນ, ໃຫ້ບັນດາຫົວໜ່ວຍງົບປະມານເອົາໃຈໃສ່ປັບປຸງບັນດາຂໍ້ຄົງຄ້າງຕາມຜົນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2021 ຈຳນວນ 18 ລະນີ, ໃນນີ້ ເກີດຂຶ້ນໃໝ່ 9 ກໍລະນີ, ຍົກມາມີ 9 ກໍລະນີ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ນິຕິກຳທີ່ຕິດພັນກັບການຄຸ້ມຄອງການເກັບລາຍຮັບ ແລະ ການຄຸ້ມຄອງລາຍຈ່າຍໃຫ້ເຂັ້ມງວດ, ເພື່ອເປັນຫລັກຖານອ້າງອີງໃນການຢັ້ງຢືນຄວາມຖືກຕ້ອງ, ຄວາມສອດຄ່ອງທາງດ້ານລະບຽບກົດໝາຍທີ່ໄດ້ກຳນົດໄວ້ ແລະ ເປັນບ່ອນອີງໃນການກວດກາ, ຕິດຕາມ ແລະ ປັບປຸງແກ້ໄຂບັນດາຂໍ້ຄົງຄ້າງຕ່າງໆໃນຕໍ່ໜ້າ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຮັບປະກັນການຄຸ້ມຄອງ ແລະ ການນຳໃຊ້ທຶນຮອນ, ຊັບສິນຂອງລັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນເປັນກ້າວໆ.

(ແສງພອນ ອິນນະລົງ)

# ສພຂ ຄຳມ່ວນ ປະກອບຄຳເຫັນໃສ່ຮ່າງນິຕິກຳໃຕ້ກົດໝາຍວ່າດ້ວຍການພົວພັນ



(ສພຊ) ເມື່ອກາງເດືອນມິຖຸນາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ໄດ້ຈັດກອງປະຊຸມລະດົມແນວຄິດປະກອບຄຳເຫັນໃສ່ຮ່າງນິຕິກຳໃຕ້ກົດໝາຍ ກ່ຽວກັບຂໍ້ຮ່າງຕົກລົງວ່າດ້ວຍການພົວພັນລະຫວ່າງ ຄະນະປະຈຳ ສພຂ ຄຳມ່ວນ ກັບຄະນະປະຈຳຄະນະກຳມະການແນວລາວສ້າງຊາດແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ບົວພັນ ແສງຈັນ ຮອງປະທານ ສພຂ ຄຳມ່ວນ; ມີບັນດາທ່ານຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ ແລະ ຫົວໜ້າ-ຮອງຫົວໜ້າຂະແໜງພາຍໃນ ສພຂ ເຂົ້າຮ່ວມ.

ຮ່າງນິຕິກຳໃຕ້ກົດໝາຍທີ່ນຳມາທາບທາມຄັ້ງນີ້ ແມ່ນຮ່າງຂໍ້ຕົກລົງວ່າດ້ວຍການພົວພັນລະຫວ່າງຄະນະປະຈຳ ສພຂ ກັບຄະນະປະຈຳຄະນະກຳມະການແນວລາວສ້າງຊາດແຂວງຄຳມ່ວນ ເຊິ່ງມີປະກອບມີ 5 ໝວດ, 22 ມາດຕາ ເຊິ່ງໃນກອງປະຊຸມບັນດາທ່ານຜູ້ແທນ ແລະ ທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນລະດົມແນວຄິດ, ຄົ້ນຄວ້າປຶກສາຫາລື ແລະ ແລກປ່ຽນຄຳຄິດເຫັນຕໍ່ກັບຮ່າງຂໍ້ຕົກລົງດັ່ງກ່າວ ໃຫ້ມີຄວາມຄົບຖ້ວນສົມບູນ, ແທດເໝາະ, ສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍກຳນົດໄວ້.

ໂອກາດດັ່ງກ່າວ, ທ່ານ ບົວພັນ ແສງຈັນ ໄດ້ຮຽກຮ້ອງໃຫ້ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມຈົ່ງໄດ້ເຊີດຊູຄວາມຮັບຜິດຊອບ ແລະ ເປັນເຈົ້າການໃນການຄົ້ນຄວ້າປະກອບຄຳຄິດເຫັນບັນດາເນື້ອໃນໃຫ້ຖືກຕ້ອງຕາມຂັ້ນຕອນລະບຽບກົດໝາຍກຳນົດ ເພື່ອຄວາມເປັນເອກະພາບ ແລະ ເປັນບ່ອນອີງໃນການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ວຽກງານໃນຕໍ່ໜ້າໃຫ້ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ.

(ເອື້ອ ມະໂນສິງ)

# ຮອງປະທານ ສພຂ ເຄື່ອນໄຫວວຽກງານທີ່ເມືອງຊຽງເງິນ



(ສພຊ) ໃນບໍ່ດົນມານີ້, ທ່ານ ສິງຕັນ ໄຊລີຊິ່ງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຫລວງພະບາງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຮັດວຽກຢູ່ສຳນັກງານເມືອງຊຽງເງິນ ແຂວງຫລວງພະບາງ ເພື່ອເປັນການຊຸກຍູ້, ຕິດຕາມກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມ ສພຂ, ມະຕິຄະນະປະຈຳ ສພຂ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ຂອງທ້ອງຖິ່ນ ຕິດພັນກັບ 2 ວາລະແຫ່ງຊາດ.

ກອງປະຊຸມໄດ້ຮັບຟັງການມີຄຳເຫັນ ແລະ ໃຫ້ທິດຊີ້ນຳໃນການດຳເນີນກອງປະຊຸມຈາກທ່ານ ສິງຕັນ ໄຊລີຊິ່ງ ໃນນາມປະທານກອງປະຊຸມ. ຈາກນັ້ນ, ໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງເມືອງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຈາກເຈົ້າເມືອງ ເມືອງຊຽງເງິນ ແລະ ໄດ້ຮັບຟັງການຈັດຕັ້ງປະຕິບັດວຽກງານ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ແຕ່ລະຂົງເຂດວຽກງານຈາກຄະນະພັກ-ຄະນະນຳ ແລະ ບັນດາຫົວໜ້າຫ້ອງການຂອງເມືອງ ໂດຍສະເພາະແມ່ນສະພາບການເກັບລາຍຮັບ-ການຄຸ້ມຄອງລາຍຈ່າຍ ແລະ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ; ການແກ້ໄຂບັນຫາຢາເສບຕິດ ແລະ ການສ້າງບ້ານປ້ອງກັນຄວາມສະຫງົບດີ; ວຽກງານການຄຸ້ມຄອງລາຄາສິນຄ້າປະເພດຕ່າງໆ; ວຽກງານກໍ່ສ້າງສ້ອມແປງເສັ້ນທາງ ພາຍໃນເມືອງ; ວຽກງານການເຕົ້າໂຮມຄວາມສາມັກຄີ ປະຊາຊົນບັນດາເຜົ່າ ແລະ ການນຳພາອົງການຈັດຕັ້ງມະຫາຊົນ; ວຽກງານການສຶກສາ ແລະ ການຍົກສູງຄຸນນະພາບການຮຽນ-ການສອນ; ວຽກງານການສ້າງໂຮງຮຽນຕົວແບບ; ວຽກງານສາທາລະນະສຸກ-ການຍົກສູງຄຸນນະພາບການປິ່ນປົວຂອງໂຮງໝໍ ແລະ ສຸກສາລາ; ວຽກງານຖະແຫລງຂ່າວ, ວັດທະນະທຳ, ການປົກປັກຮັກສາວັດທະນະທຳອັນດີງາມຂອງຊາດ ແລະ ຂອງເຜົ່າ; ວຽກງານແຮງງານ ແລະ ສະຫວັດດີການສັງຄົມ, ການແກ້ໄຂໄພວ່າງງານ, ການແກ້ໄຂນະໂຍບາຍຕໍ່ຜູ້ມີຜົນງານຄວາມດີ ຕໍ່ປະເທດຊາດຜ່ານມາ; ວຽກງານການຄຸ້ມຄອງທີ່ດິນແຕ່ລະປະເພດ ແລະ ການອອກໃບຕາດິນ.

ນອກນີ້, ປະທານກອງປະຊຸມ ຍັງໄດ້ມີຄຳເຫັນເຈາະຈີ້ມຊັກຖາມບາງຈຸດທີ່ຍັງບໍ່ທັນຈະແຈ້ງ ແລະ ບັນດາທ່ານຜູ້ແທນກອງປະຊຸມ ທີ່ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ກໍໄດ້ອະທິບາຍຊີ້ແຈງຄຳເຫັນເຈາະຈີ້ມຊັກຖາມຢ່າງກົງໄປກົງມາ.

ຕອນທ້າຍ, ປະທານກອງປະຊຸມ ໄດ້ເນັ້ນໜັກ ແລະ ຮຽກຮ້ອງໃຫ້ຄະນະພັກ-ຄະນະນຳຂອງເມືອງ ຈົ່ງເອົາໃຈໃສ່ສືບຕໍ່ຍົກສູງຄວາມຮັບຜິດຊອບ ແລະ ໜ້າທີ່ການເມືອງຂອງຕົນທີ່ພັກ-ລັດ ແລະ ປະຊາຊົນມອບໝາຍໃຫ້ ກໍຄືການນຳພາ-ຊີ້ນຳວຽກງານຂອງຕົນໃນແຕ່ລະຂົງເຂດໃຫ້ສາມາດຈັດຕັ້ງປະຕິບັດບັນລຸຕາມແຜນການ ແລະ ຄາດໝາຍສູ້ຊົນທີ່ວາງໄວ້ ໃນໄລຍະ 6 ເດືອນທ້າຍປີ 2022 ເຮັດໃຫ້ເມືອງມີສະຖຽນລະພາບທາງດ້ານການເມືອງທີ່ໜັກແໜ້ນ, ເສດຖະກິດມີການຂະຫຍາຍຕົວ ຢ່າງຕໍ່ເນື່ອງ, ປົກປັກຮັກສາຮີດຄອງປະເພນີອັນດີງາມໃຫ້ມີຄວາມຍືນຍົງ ເຮັດໃຫ້ການຄຸ້ມຄອງລັດ-ຄຸ້ມຂອງສັງຄົມ ດ້ວຍກົດໝາຍ ນັບມື້ນັບມີຄວາມສັກສິດ ພ້ອມທັງເປັນສ່ວນໜຶ່ງໃນການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນກ້າວໜ້າເປັນກ້າວໆ.

(ວິສະນຸ ເພັດສຸພັນ)

# ມອບ-ຮັບໜ້າທີ່ວຽກງານຂອງຄະນະເລຂາທິການ ສພຂ ຜົ້ງສາລີ



(ສພຊ) ຕອນເຊົ້າວັນທີ 13 ມິຖຸນາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ ໄດ້ຈັດພິທີມອບ-ຮັບໜ້າທີ່ລະຫວ່າງຜູ້ຮັບຜິດຊອບຊີ້ນຳວຽກງານບໍລິຫານ-ການເງິນ (ຜູ້ເກົ່າ-ຜູ້ໃໝ່) ແລະ ວຽກງານຂໍ້ມູນຂ່າວສານ, ຫໍສະໝຸດ (ຜູ້ເກົ່າ-ຜູ້ໃໝ່) ໂດຍການເປັນປະທານຂອງທ່ານ ທຸມເພັງ ຈອມວິສານ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ມີປະທານ-ຮອງປະທານຄະນະກຳມະການ, ເລຂາທິການ, ຮອງເລຂາທິການ ສພຂ ພ້ອມດ້ວຍ ພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງທ່ານ ຄຳຕຸ່ນ ວົງສາ ຮອງເລຂາທິການ ສພຂ (ຜູ້ຊີ້ນຳວຽກງານຈັດຕັ້ງ-ກວດກາ) ຂຶ້ນຜ່ານຂໍ້ຕົກລົງວ່າດ້ວຍການແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບຂອງເລຂາທິການ, ຮອງເລຂາທິການ ສພຂ ສະບັບເລກທີ 161/ຄລຂ, ລົງວັນທີ 18 ມີນາ 2022; ໄດ້ຮັບຟັງທ່ານ ນາງ ວຽງຄຳ ວໍລະຈິດ ຮອງຮອງເລຂາທິການ ສພຂ (ຜູ້ຊີ້ນຳວຽກບໍລິຫານ-ການເງິນຜູ້ເກົ່າ) ຂຶ້ນຜ່ານບົດບັນທຶກມອບ-ຮັບໜ້າທີ່ລະຫວ່າງຜູ້ຮັບຜິດຊອບຊີ້ນຳວຽກງານບໍລິຫານ-ການເງິນ ແລະ ຮັບຟັງທ່ານ ຄຳມາ ສຸລິວົງ ຮອງ ຄລຂ (ຜູ້ຊີ້ນຳວຽກງານຂໍ້ມູນຂ່າວສານ, ຫໍສະໝຸດຜູ້ເກົ່າ) ຂຶ້ນຜ່ານບົດບັນທຶກມອບ-ຮັບໜ້າທີ່ລະຫວ່າງຜູ້ຮັບຜິດຊອບຊີ້ນຳວຽກງານຂໍ້ມູນຂ່າວສານ, ຫໍສະໝຸດ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ແລກປ່ຽນ, ປະກອບຄຳເຫັນຮ່າງບົດບັນທຶກດັ່ງກ່າວ ຢ່າງກົງໄປກົງມາ ເພື່ອເປັນຂໍ້ມູນໃຫ້ໃນການປັບປຸງເນື້ອໃນບົດບັນທຶກໃຫ້ມີຄວາມອຸດົມສົມບູນ. ພ້ອມກັນນັ້ນ, ໄດ້ເຊັນບົດບັນທຶກມອບ-ຮັບໜ້າທີ່ ລະຫວ່າງທ່ານ ວຽງຄຳ ວໍລະຈິດ ຜູ້ຮັບຜິດຊອບຊີ້ນຳວຽກງານບໍລິຫານ-ການເງິນ ຜູ້ເກົ່າ ແລະ ທ່ານ ນາງ ພອນສະຫວັນ ສັກຕິຄຸນ ເລຂາທິການ ສພຂ, ຮັບຜິດຊອບຊີ້ນຳວຽກງານບໍລິຫານ-ການເງິນ ຜູ້ໃໝ່; ໄດ້ເຊັນບົດບັນທຶກມອບ-ຮັບໜ້າທີ່ລະຫວ່າງ ທ່ານ ຄຳມາ ສຸລິວົງ ຜູ້ຮັບຜິດຊອບຊີ້ນຳວຽກງານຂໍ້ມູນຂ່າວສານ, ຫໍສະໝຸດ ຜູ້ເກົ່າ ແລະ ທ່ານ ນາງ ວຽງຄຳ ວໍລະຈິດ ຜູ້ຮັບຜິດຊອບຊີ້ນຳວຽກງານຂໍ້ມູນຂ່າວສານ, ຫໍສະໝຸດ ຜູ້ໃໝ່.

ຕອນທ້າຍກອງປະຊຸມ, ທ່ານ ທຸມເພັງ ຈອມວິສານ ຍັງໄດ້ໂອ້ລົມຕໍ່ພິທີດັ່ງກ່າວ ເຊິ່ງທ່ານໄດ້ຊົມເຊີຍຕໍ່ຄະນະຮັບຜິດຊອບກະກຽມພິທີມອບ-ຮັບໃນຄັ້ງນີ້ ແລະ ທ່ານຍັງເນັ້ນບາງບັນຫາທີ່ສຳຄັນມີບາງຕອນທ່ານໄດ້ກ່າວວ່າ: "ເອົາໃຈໃສ່ປະຕິບັດພາລະບົດບາດການເປັນເສນາທິການ ຕາມມະຕິວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະເລຂາທິການ ສພຂ ເປັນຕົ້ນແມ່ນການຄົ້ນຄ້ວາ-ສັງລວມເນື້ອໃນວຽກງານຮອບດ້ານ, ວຽກງານຄຸ້ມຄອງບໍລິຫານ, ວຽກງານຈັດຕັ້ງ-ພະນັກງານ ແລະ ວຽກງານອື່ນໆ, ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງ ສພຂ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ; ເອົາໃຈໃສ່ເພີ່ມທະວີການສຶກສາອົບຮົມການເມືອງແນວຄິດ, ການຈັດຕັ້ງ ແລະ ການຄຸ້ມຄອງພະນັກງານ-ລັດຖະກອນ ຕາມພາລະບົດບາດ, ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ; ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍ; ເອົາໃຈໃສ່ໃນປະສານສົມທົບກັບພາກສ່ວນຕ່າງໆພາຍໃນ ແລະ ພາຍນອກ ເພື່ອອຳນວຍຄວາມສະດວກດ້ານບໍລິຫານ-ພິທີການ ໃຫ້ແກ່ການເຄື່ອນໄຫວວຽກງານຕ່າງໆຂອງ ສພຂ; ເປັນໃຈກາງໃນການເກັບກຳຂໍ້ມູນ-ຂ່າວສານ, ຄົ້ນຄວ້າໄຈ້ແຍກ ແລະ ສະໜອງຂໍ້ມູນໃຫ້ທຸກພາກສ່ວນ ທີ່ພົວພັນເຖິງການຈັດຕັ້ງປະຕິບັດວຽກງານຂອງ ສພຂ; ເອົາໃຈໃສ່ສ້າງ ແລະ ປັບປຸງຫ້ອງສະໝຸດຂອງ ສພຂ (ແມ່ນເປັນວຽກໃໝ່) ແນໃສ່ສ້າງສິ່ງອຳນວຍຄວາມສະດວກ ໃນການເຂົ້າເຖິງຂໍ້ມູນ-ຂ່າວສານຂອງ ສພຂ".

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ໃນຕໍ່ໜ້າ ສພຂ ບໍ່ແກ້ວ ຈະສຸມໃສ່ຈັດຕັ້ງປະຕິບັດ ຫລາຍວຽກງານທີ່ໜ້າສົນໃຈ



ທ່ານ ຈອມສີ ລັດຕະນະປັນ ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 5, ປະທານສະພາປະຊາຊົນແຂວງ (ສພຂ) ບໍ່ແກ້ວ ຊຸດທີ II ມີຄວາມຮູ້ສຶກພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຕາງໜ້າໃຫ້ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ກໍຄືຕາງໜ້າປະຊາຊົນແຂວງບໍ່ແກ້ວ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນ ເພື່ອໃຫ້ສັງຄົມໄດ້ຮັບຮູ້ກ່ຽວກັບຜົນງານອັນພົ້ນເດັ່ນ ເຊິ່ງເລີ່ມແຕ່ກອງປະຊຸມປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ມາຮອດປັດຈຸບັນທ່ານໃຫ້ຮູ້ວ່າ: ຄະນະ ສສຊ ປະຈຳເຂດເລືອກຕັ້ງ ກໍຄື ສພຂ ສາມາດຍາດໄດ້ຜົນງານທີ່ພົ້ນເດັ່ນຫລາຍດ້ານ ດັ່ງນີ້:

**ດ້ານການສ້າງ ແລະ ປັບປຸງນິຕິກຳ:** ສສຊ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ບໍ່ແກ້ວ ໄດ້ນຳເອົາບັນດາຮ່າງກົດໝາຍຈາກ ສພຊ ຈຳນວນ 27 ສະບັບ ລົງທາບທາມປະກອບຄຳເຫັນໃສ່ຮ່າງກົດໝາຍດັ່ງກ່າວ ແລະ ສັງລວມການປະກອບຄຳເຫັນເພື່ອສົ່ງໃຫ້ ສພຊ ພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນ ແລະ ກອງປະຊຸມສະໄໝວິສາມັນຂອງ ສພຊ ຊຸດທີ IX ໄດ້ທັງໝົດ 22 ສະບັບ, ຍັງຈະສືບຕໍ່ຄົ້ນຄວ້າ, ພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ຈຳນວນ 9 ສະບັບ; ໄດ້ປັບປຸງມະຕິຂອງຄະນະປະຈຳ ສພຂ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວພາຍໃນ ສພຂ 5 ສະບັບ; ມະຕິຂອງຄະນະປະຈຳ ສພຂ ວ່າດ້ວຍການບັນຈຸສັບຊ້ອນ ສສຂ ຊຸດທີ II ສັງກັດແຕ່ລະຄະນະກຳມະການ; ມະຕິວ່າດ້ວຍການແຕ່ງຕັ້ງປະທານ, ຮອງປະທານ ແລະ ກຳມະການຄະນະສະມາຊິກສະພາປະຊາຊົນແຂວງ ຊຸດທີ II ປະຈຳເຂດເລືອກຕັ້ງ 5 ເມືອງ; ມະຕິວ່າດ້ວຍການແຕ່ງຕັ້ງຮອງເລຂາທິການ ສພຂ; ມະຕິວ່າດ້ວຍການກຳນົດພະນັກງານນຳພາ-ຄຸ້ມຄອງ; ມະຕິວ່າດ້ວຍການຮັບຮອງເອົາກົງຈັກ ແລະ ບຸກຄະລາກອນ; ມະຕິວ່າດ້ວຍການແຕ່ງຕັ້ງຫົວໜ້າ-ຮອງຫົວໜ້າຂະແໜງ; ມະຕິວ່າດ້ວຍການປັບປຸງກົງຈັກເສນາທິການ ແລະ ແຕ່ງຕັ້ງບຸກຄະລາກອນ ສພຂ ຊຸດທີ II ລວມທັງໝົດ 7 ສະບັບ; ສ້າງບົດບັນທຶກການປະສານງານ ລະຫວ່າງຄະນະກຳມະການ ສພຂ ກັບພາກສ່ວນທີ່ກ່ຽວຂ້ອງ ຈຳນວນ 11 ສະບັບ.

**ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ:** ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ກໍຄື ສສຂ ບໍ່ແກ້ວ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າຢູ່ໃນເຂດເລືອກຕັ້ງຂອງຕົນ ຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ດ້ວຍຄວາມຮັບຜິດຊອບສູງ ແລະ ໄດ້ພິຈາລະນາ, ຮັບຮອງເອົາບັນດາເນື້ອໃນແຕ່ກອງປະຊຸມຄັ້ງປະຖົມມະລຶກມາຮອດປັດຈຸບັນ ໂດຍອອກເປັນມະຕິໄດ້ທັງໝົດ 20 ສະບັບ; ນອກນັ້ນກໍ່ໄດ້ພິຈາລະນາຮັບຮອງເອົາບຸກຄະລາກອນຂັ້ນຫົວໜ້າພະແນກ, ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງຈຳນວນ 27 ທ່ານ.

**ດ້ານການຕິດຕາມກວດກາ:** ເອົາໃຈໃສ່ປະສານສົມທົບກັບ ຄະນະປະຈຳສະພາແຫ່ງຊາດ, ອົງການປົກຄອງແຂວງ ແລະ ສສຂ ໃນການຕິດຕາມການປະເມີນການຈັດຕັ້ງປະຕິບັດກົດໝາຍຈຳນວນ 2 ຄັ້ງ ເປັນຕົ້ນແມ່ນປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການກັນ ແລະ ຄວບຄຸມພະຍາດຕິດຕໍ່ ສຳລັບບັນດາແຂວງພາກເໜືອ ທີ່ແຂວງຫລວງພະບາງ ແລະ ປະເມີນການຈັດຕັ້ງປະຕິບັດກົດໝາຍ ຈຳນວນ 4 ສະບັບ ທີ່ຢູ່ແຂວງບໍ່ແກ້ວ ເຊັ່ນ (ກົດໝາຍວ່າດ້ວຍທີ່ດິນ; ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ; ກົດໝາຍ ວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ). ໄດ້ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບັນດາຄາດໝາຍຂອງຂະແໜງການສຶກສາທິການ ແລະ ກິລາ, ການປັບປຸງຄຸນນະພາບລະບົບການຮຽນການສອນໃນທຸກຊັ້ນ, ທຸກສາຍໃນໄລຍະໃໝ່ ແລະ ການຈັດຕັ້ງປະຕິບັດກິລາກາຍຍະກຳ ນອກນັ້ນ, ໄດ້ຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຂອງພາກສ່ວນທີ່ກ່ຽວຂ້ອງ ຢ່າງປົກກະຕິ ເປັນຕົ້ນແມ່ນຕິດຕາມກວດກາຕາມບົດສະຫລຸບໃນແຕ່ລະໄລຍະ, ຕິດຕາມການລາຍງານຜ່ານກອງປະຊຸມ ສພຂ, ກອງປະຊຸມຮ່ວມລະຫວ່າງ ບັນດາຄະນະກຳມະການກັບບັນດາພະແນກການຂັ້ນແຂວງ; ເຂົ້າຮ່ວມກັບການນຳຂັ້ນແຂວງ, ຂັ້ນເມືອງ ເຄື່ອນໄຫວຕິດຕາມ, ຊຸກຍູ້ວຽກງານກໍ່ສ້າງຮາກຖານການເມືອງ, ວຽກງານພັດທະນາຊົນນະບົດ ຕິດພັນກັບວຽກງານ 3 ສ້າງ ຢູ່ບັນດາຮາກຖານຂັ້ນເມືອງ.

ນັບແຕ່ກອງປະຊຸມປະຖົມມະລຶກຂອງ ສພຊ ຊຸດທີ IX ມາຮອດປັດຈຸບັນ, ຄສຊ ປະຈຳເຂດເລືອກຕັ້ງ ກໍຄື ສພຂ ມີຜົນສຳເລັດໃນການເຜີຍແຜ່ ແລະ ຈັດຕັ້ງລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ, ມະຕິຂອງສະພາປະຊາຊົນແຂວງ ແລະ ບັນດານິຕິກຳໃຕ້ກົດໝາຍ ຈຳນວນໜຶ່ງ ໂດຍໄດ້ສົມທົບກັບ ສສຂ ລົງຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນມະຕິຂອງກອງປະຊຸມ ສພຊ, ມະຕິກອງປະຊຸມ ສພຂ ແລະ ບັນດາກົດໝາຍ, ນິຕິກຳຕ່າງໆ ທີ່ໄດ້ຮັບຮອງເອົາໃນກອງປະຊຸມຂອງ ສພຊ ແລະ ສພຂ ແຕ່ລະຄັ້ງຢູ່ອ້ອມຂ້າງແຂວງ, ອ້ອມຂ້າງເມືອງ ແລະ ບັນດາບ້ານ ໄດ້ທັງໝົດ 140 ຈຸດ ມີຜູ້ເຂົ້າຮ່ວມທັງໝົດ 8.582 ເທື່ອຄົນ ຍິງ 3.169 ເທື່ອຄົນ.

ໂອກາດດັ່ງກ່າວ, ທ່ານ ຈອມສີ ລັດຕະນະປັນ ຍັງໃຫ້ຮູ້ວ່າ: ໃນຕໍ່ໜ້າຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ກໍຄື ສພຂ ບໍ່ແກ້ວ ຈະສູ້ຊົນສຸມໃສ່ການຈັດຕັ້ງປະຕິບັດວຽກງານຫລາຍດ້ານ ໂດຍສະເພາະແມ່ນກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ; ຈັດຕັ້ງໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ໃຫ້ຜູ້ມີສິດເລືອກຕັ້ງໃນເຂດເລືອກຕັ້ງຂອງຕົນຢ່າງກວ້າງຂວາງ; ຈັດຕັ້ງການສະເຫລີມສະຫລອງປີສາມັກຄີມິດຕະພາບລາວ-ຫວຽດນາມ ປີ 2022, ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ຄົບຮອບ 45 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມ ຄົບຮອບ 60 ປີ; ສືບຕໍ່ຕິດຕາມກວດກາ ແລະ ຊຸກຍູ້ໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ (ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ) ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແລະ ເປັນຂະບວນທີ່ດີ; ຄົ້ນຄວ້າບັນດາເນື້ອໃນທີ່ຈະນຳເຂົ້າກອງປະຊຸມສະໄໝວິສາມັນ, ສະໄໝສາມັນ ຂອງ ສພຊ ກໍຄື ສພຂ ໃຫ້ເລິກເຊິ່ງ, ສອດຄ່ອງກັບກົດໝາຍ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ແລະ ການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນໃນແຕ່ລະໄລຍະ; ຮັບປະກັນການພິຈາລະນາ, ຮັບຮອງເອົາບັນດາເນື້ອໃນສຳຄັນພື້ນຖານຂອງຊາດ ແລະ ທ້ອງຖິ່ນ ໃຫ້ສາມາດນຳໄປຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບສະພາບຕົວຈິງ; ຈະຍົກສູງບົດບາດໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໃນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ; ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດມະຕິຂອງ ສພຊ, ມະຕິຂອງ ສພຂ ແລະ ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ຄຳສະເໜີຂອງປະຊາຊົນບັນດາເຜົ່າ ໃຫ້ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບກົດໝາຍ, ໂປ່ງໃສ ແລະ ຍຸຕິທຳ; ຍົກສູງຂີດຄວາມສາມາດໃຫ້ແກ່ ສສຊ, ສສຂ ໂດຍການຈັດຕັ້ງ ແລະ ເຂົ້າຮ່ວມການຝຶກອົບຮົມວຽກງານຕິດຕາມກວດກາ ໃຫ້ແກ່ ສສຊ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 5 ກໍຄື ສສຂ ຊຸດທີ II; ເອົາໃຈໃສ່ປັບປຸງຂອດການປະສານງານລະຫວ່າງ ຄະນະປະຈຳ ສພຂ ກັບຄະນະປະຈຳ ສພຊ, ຄສຊ ປະຈຳເຂດເລືອກຕັ້ງ, ສພຂ, ກົງຈັກທີ່ຄະນະປະຈຳ ສພຂ ສ້າງຕັ້ງ, ອົງການປົກຄອງແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີຄວາມກົມກຽວ ແລະ ເຂັ້ມແຂງ; ຍົກສູງບົດບາດການພົວພັນຮ່ວມມືກັບຕ່າງປະເທດ ເປັນຕົ້ນແມ່ນແຂວງແຮກສ່ຽວຂອງບັນດາປະເທດເພື່ອນມິດ ແລະ ປະເທດໃກ້ຄຽງ.



# ການເຄື່ອນໄຫວວຽກງານຂອງ ສພຂ ສາລະວັນ



(ສພຊ) ໃນວັນທີ 16 ມິຖຸນານີ້, ທີ່ຫ້ອງປະຊຸມສະໂມສອນແຂວງສາລະວັນ ໂດຍການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ທັງເປັນປະທານສະພາປະຊາຊົນແຂວງ (ສພຂ) ໄດ້ຈັດກອງປະຊຸມຮ່ວມກັບຂົງເຂດເສດຖະກິດ-ການເງິນ ເພື່ອເປັນການເກັບກຳຂໍ້ມູນເພີ່ມຕື່ມໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ ໃນການເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເຊິ່ງມີຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າພະແນກໃນຂົງເຂດເສດຖະກິດ-ການເງິນ, ບັນດາທະນາຄານຕ່າງໆທີ່ປະຈຳຢູ່ແຂວງ, ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ບັນດາໂຄງການລົງທຶນຂອງລັດໃນການກໍ່ສ້າງພື້ນຖານໂຄ່ງລ່າງ, ບັນດາໂຄງການເຊົ່າ-ສຳປະທານທີ່ດິນ; ການຈັດຕັ້ງປະຕິບັດແຜນງົບປະມານໃນທົ່ວແຂວງ; ການຄຸ້ມຄອງທຸລະກິດນ້ຳມັນ ບັນຫາການເໜັງຕີງຂອງສິນຄ້າ; ຮັບຟັງການລາຍງານກ່ຽວກັບອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ຄຸ້ມຄອງເງິນຕາການຄຸ້ມຄອງຮ້ານແລກປ່ຽນເງິນຕາ; ລາຍງານການຂຸດຄົ້ນແຮ່ທາດຕ່າງໆ ລວມທັງຖ່ານຫີນ, ດິນໜຽວ, ກາວ, ແຮ່ຊາຍ, ດິນ. ຈາກນັ້ນ, ໄດ້ມີການແລກປ່ຽນຄຳຄິດຄຳເຫັນຕໍ່ເນື້ອໃນທີ່ນຳມາຄົ້ນຄວ້າໃນກອງປະຊຸມຢ່າງເລິກເຊິ່ງ ແລະ ກົງໄປກົງມາ.

ກ່ອນໜ້ານີ້, ໃນວັນທີ 14 ມິຖຸນານີ້ ຢູ່ທີ່ຫ້ອງປະຊຸມສະໂມສອນແຂວງ, ສພຂ ສາລະວັນ ຍັງໄດ້ຈັດພິທີປາຖະກະຖາເລົ່າມູນເຊື້ອວັນສ້າງຕັ້ງອົງການກວດກາພັກ-ລັດ ຄົບຮອບ 40 ປີ (16/2/1982-16/2/2022) ໂດຍການປະຖາກະຖາຂອງທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານ ສພຂ, ມີຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຂະແໜງ, ພະນັກງານວິຊາການພາຍໃນ ສພຂ ເຂົ້າຮ່ວມ.

ໃນພິທີ, ຮອງປະທານ ສພຂ ໄດ້ຍົກໃຫ້ເຫັນກ່ຽວກັບວັນສ້າງຕັ້ງ ແລະ ປະຫວັດແຫ່ງການກຳເນີດການເຕີບໃຫຍ່ຂະຫຍາຍຕົວຂອງອົງກວດກາພັກ-ລັດ ໃນການປະກອບສ່ວນພາລະກິດປະຕິວັດຂອງແຕ່ລະໄລຍະ ມູນເຊື້ອອັນດີງາມ 40 ປີຂອງອົງການກວດກາພັກ-ລັດ ເຊິ່ງເປັນຂີດໝາຍທີ່ສຳຄັນ ໃນຂະບວນວິວັດ ເພີ່ມທະວີພາລະບົດບາດການນຳພາຂອງພັກໃນການຄຸ້ມຄອງລັດຄຸ້ມຄອງເສດຖະກິດ-ສັງຄົມ ພັກເຮົາຍາມໃດກໍຖືສຳຄັນໃນວຽກງານກວດກາ ເຊິ່ງເຫັນໄດ້ວ່າກ່ອນກ້າວໄປເຖິງວັນສ້າງຕັ້ງພັກຢ່າງເປັນທາງການ ໃນວັນທີ 22 ມີນາ 1955 ພາຍໃຕ້ການຊີ້ນຳຂອງປະທານ ໄກສອນ ພົມວິຫານ ກໍຄືບັນດາທ່ານການນຳທີ່ເປັນແກ່ນສານໃນເວລານັ້ນ ກໍໄດ້ມີການຊີ້ນຳການກວດກາສະມາຊິກພັກກອມມູນິດອິນດູຈີນສັງກັດຄະນະພັກແຄວ້ນລາວ ຈຳນວນ 600 ສະຫາຍ ເພື່ອກັ່ນກອງສະມາຊິກພັກທີ່ຍັງຄົບມາດຖານເງື່ອນໄຂ, ນັບແຕ່ມື້ໄດ້ຮັບການສ້າງຕັ້ງເປັນຕົ້ນມາ ພັກໄດ້ຖືເອົາວຽກງານກວດກາພາຍໃນພັກເປັນໜຶ່ງໃນພາລະບົດບາດນຳພາທີ່ຂາດບໍ່ໄດ້ ໂດຍຍຶດໝັ້ນທັດສະນະທີ່ວ່າການນຳພາຕ້ອງຕິດພັນກັບການກວດກາ ຖ້າບໍ່ມີການກວດກາກໍເໝືອນບໍ່ມີການນຳພາ ພາຍຫລັງຍຶດອຳນາດການປົກຄອງໃນທົ່ວປະເທດ ໃນວັນທີ 2 ທັນວາ 1975 ການເພີ່ມທະວີການກວດກາມີຄວາມຈຳເປັນຕ້ອງກວດກາຕໍ່ການຄຸ້ມຄອງບໍລິຫານຂອງບັນດາອົງການລັດ ແລະ ທົ່ວລະບົບການເມືອງ, ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 8 ສະໄໝທີ II ປີ 1980 ໄດ້ກຳນົດວ່າ ຕ້ອງຈັດຕັ້ງຄະນະກວດກາຂຶ້ນທັນທີ ເພື່ອຊ່ວຍສູນກາງພັກ, ລັດຖະບານ ແລະ ສະພາປະຊາຊົນສູງສຸດ ໃນການກວດກາການປະຕິບັດມະຕິຂອງພັກ, ກົດໝາຍ ແລະ ຂໍ້ກຳນົດຕ່າງໆຂອງລັດ ໂດຍອີງໃສ່ມະຕິດັ່ງກ່າວ ສູນກາງພັກສູນກາງພັກປະຊາຊົນປະຕິວັດລາວ, ຄະນະປະຈຳສະພາສູງສຸດ ແລະ ສະພາລັດຖະມົນຕີ ສປປລາວ ໄດ້ອອກລຳລັດ 02 ລົງວັນທີ 16 ກຸມພາ 1982 ກຳນົດໃຫ້ສ້າງຕັ້ງຄະນະກຳມະການກວດກາພັກ-ລັດ ຂັ້ນສູນກາງ, ແຂວງ ແລະ ເມືອງ, ແບ່ງກຳມະການຮັບຜິດຊອບ ແລະ ໄດ້ມີມະຕິຕົກລົງຮັບຮອງເອົາວັນທີ 16 ກຸມພາ 1982 ເປັນວັນສ້າງຕັ້ງອົງການກວດກາພັກ-ລັດ.

ການປາຖະກະຖາຄັ້ງນີ້ ແມ່ນເພື່ອເຮັດໃຫ້ພະນັກງານ-ລັດຖະກອນ ພາຍໃນ ສພຂ ເຫັນໄດ້ມູນເຊື້ອປະຫວັດຄວາມເປັນມາແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງວັນສ້າງຕັ້ງອົງການກວດກາພັກ-ລັດ ຕະຫລອດໄລຍະ 40 ປີ ແລະ ເປັນການປູກຈິດສຳນຶກໃຫ້ແກ່ພະນັກງານ ໄດ້ຮັບຮູ້ ແລະ ເຂົ້າໃຈເນື້ອໃນວັນສຳຄັນດັ່ງກ່າວຢ່າງເລິກເຊິ່ງເຖິງຖອງ.

ໃນຕອນທ້າຍ, ຍັງໄດ້ຜ່ານຂໍ້ຕົກລົງຄະນະຊີ້ນຳ ແລະ ຄະນະຮັບຜິດຊອບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຊຸດທີ II ເພື່ອເປັນການທ້າງຫາກະກຽມແຕ່ຫົວທີ ຕໍ່ກັບບັນດາໜ້າວຽກທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດ ເພື່ອເຮັດໃຫ້ກອງປະຊຸມມີຜົນສຳເລັດຢ່າງຈົບງາມ.

(ນາງ ຄັດສອນ ຮຸ່ງສະຫວ່າງ ແລະ ດີລຳພົນ ພົມມະຈັນ)




# 4 ຢ່າງທີ່ບໍ່ຄວນຫລົງໄຫລ

**# ອານົງເດດ ສິງດາລັກ**



ຄົນຢູ່ໃນສັງຄົມລ້ວນ ແຕ່ດຳລົງຊີວິດທີ່ຄວາມແຕກຕ່າງກັນ, ບາງຄົນໃຊ້ຊີວິດຢູ່ກັບສິ່ງທີ່ຕົນຮັກ ແລະ ພໍໃຈ ແຕ່ບາງຄົນຍັງດົ້ນຮົນໃຫ້ໄດ້ຢູ່ກັບສິ່ງທີ່ຕົນຫລົງໄຫລ ເຊິ່ງໃນບົດນີ້ຈະເວົ້າເຖິງ 4 ຢ່າງທີ່ຄົນເຮົາມັກຈະຫລົງໄຫລ ຈົນເຮັດໃຫ້ຊີວິດບໍ່ມີຄວາມສຸກນັ້ນກໍຄື:

**1. ລັກສະນະພາຍນອກ:** ອັນໄດ້ແກ່ຮູບຮ່າງໜ້າຕາ, ສີຜິວ, ຄວາມສູງ-ຕ່ຳ... ເຊິ່ງບາງຄົນຍັງເກີດມີຄວາມຫລົງໄຫລໃນສິ່ງດັ່ງກ່າວ ແລະ ຊອກວິທີທາງເພື່ອໃຫ້ໄດ້ຢູ່ໃກ້ຊິດກັບຄົນທີ່ມີຮູບຮ່າງໜ້າຕາດີ ເຊິ່ງໃນປັດຈຸບັນນີ້ ອະໄວຍະວະພາຍນອກແກ້ໄຂ ແລະ ສາມາດປ່ຽນແປງໄດ້ ດ້ວຍວິທີການສັນຍະກຳ ໂດຍນຳໃຊ້ເຕັກນິກວິຊາການທາງດ້ານການແພດທີ່ທັນສະໄໝກໍສາມາດເຮັດໃຫ້ງາມໄດ້; ສະນັ້ນ ທັດສະນະແນວຄິດ, ຈິດໃຈ ແລະ ການປະພຶດປະຕິບັດທີ່ດີໃນການດຳລົງຊີວິດຕົວຈິງຕ່າງຫາກ ທີ່ພວກເຮົາຄວນສຶກສາ, ຮຽນແບບ ແລະ ເອົານຳໃຊ້ ຫລື ເອົາເປັນແບບຢ່າງ ເພາະຮູບຮ່າງໜ້າຕາບໍ່ໄດ້ເປັນສິ່ງຕັດສິນທາດແທ້ຂອງຄົນ.

**2. ຄາລົມ:** ໝາຍເຖິງຄຳເວົ້າທີ່ມີລັກສະນະຄົມຄາຍ, ມີສາລະ ແລະ ໜ້າຟັງ ອັນເຮັດເຮົາຫລົງໄຫລ, ຫລົງເຊື່ອໄດ້ ໂດຍຂາດການພິຈາລະນາ, ຕຶກຕອງຢ່າງລະອຽດຖີ່ຖ້ວນ ເມື່ອເປັນແນວນັ້ນ ພວກເຮົາກໍຈະກາຍເປັນເຫຍື່ອຂອງຄົນທີ່ບໍ່ຫວັງດີຕໍ່ເຮົາໄດ້ງ່າຍດາຍ; ສະນັ້ນ, ຄວນພິຈາລະນາສິ່ງທີ່ໄດ້ຮັບຟັງມານັ້ນດ້ວຍວິຈາລະນະຍານ, ຄວາມຮູ້ຄວາມສາມາດ ແລະ ເຫດການຕົວຈິງຫລາຍກວ່າພິຈາລະນາຈາກຄຳເວົ້າ ຫລື ການຮັບຟັງພຽງຢ່າງດຽວ ໂດຍຂາດຫລັກຖານຈະເປັນການດີທີ່ສຸດ.

**3. ວັດຖຸ:** ໝາຍເຖິງສິ່ງທີ່ຢູ່ນອກກາຍຂອງຄົນເຮົາ ເປັນຕົ້ນແມ່ນເງິນ, ຄຳ, ສິ່ງທີ່ມີຄ່າຕ່າງໆ ຍ້ອນແນວນັ້ນ ຈຶ່ງເຮັດໃຫ້ຄົນຈຳນວນໜຶ່ງຫລົງໄຫລ ເກີດມີຄວາມຢາກໄດ້, ຢາກດີ, ຢາກຮັ່ງ, ຢາກມີ ແລະ ເກີດມີແນວຄິດລັກໂລບ, ຕົວະຍົວະຫລອກລວງເອົາສິ່ງທີ່ມີຄ່າຈາກພໍ່ແມ່ພີ່ນ້ອງ ຫລື ຄົນໃກ້ຊິດ ໂດຍບໍ່ຄິດພິຈາລະນາຢ່າງລະອຽດຖີ່ຖ້ວນ ມັນຈະສົ່ງຜົນເຮັດໃຫ້ສູນເສຍມິດຕະພາບທີ່ດີ ສະນັ້ນ, ບໍ່ປ່ອຍໃຫ້ຕົນເອງກາຍເປັນຄົນປະເພດທີ່ວ່າ "ເຫັນເງິນໜ້າດຳ ເຫັນຄຳໜ້າເສົ້າ" ເພາະຈະເຮັດໃຫ້ເຮົາຕົກຢູ່ໃນວັງວົນແຫ່ງຄວາມທຸກຕະຫລອດເວລາ.

**4. ສັງຄົມ:** ແມ່ນການຄົມຄ້າສະມາຄົມໃນຊຸມຊົນ ຫລື ໝູ່ຄົນທີ່ມີຄວາມສຳພັນຮ່ວມມື ແລະ ມີຈຸດປະສົງຮ່ວມກັນ ເຊິ່ງບາງຄັ້ງຄວາມນິຍົມຊົມຊອບໃນໝູ່ສັງຄົມ ອາດຈະເຮັດໃຫ້ເກີດມີຄວາມຄິດຫລົງໄຫລ ຫລືຫລົງລືມຕົວແບບບໍ່ຕັ້ງໃຈ ໄປນຳກະແສສັງຄົມ ກໍຄືວັດທະນະທຳໃໝ່ທີ່ເກີດຂຶ້ນ ເປັນຕົ້ນແມ່ນການນຸ່ງຖືແຕ່ງຕົວຕາມກະແສຂອງສັງຄົມ ເຮັດໃຫ້ເກີດມີການໃຊ້ຈ່າຍຟຸມເຟືອຍ; ສະນັ້ນ, ເຖິງວ່າພວກເຮົາຈະຢູ່ໃນສັງຄົມດຽວກັນກໍຕາມ ກໍຄວນພິຈາລະນາຮັບເອົາແຕ່ສິ່ງດີໆ ແລະ ບໍ່ຄວນປ່ອຍໃຫ້ຕົນເອງລືມຕົວຫລົງໄຫລໄປຕາມກະແສສັງຄົມ, ບໍ່ຄວນປະຖິ້ມສິ່ງທີ່ດີ ອັນເປັນມູນເຊື້ອອັນດີງາມຂອງຕົນທີ່ເຄີຍປະຕິບັດສືບທອດກັນມາຫລາຍຍຸກຫລາຍສະໄໝ.

ຄວາມຫລົງໄຫລ ແລະ ລືມຕົວ ອາດຈະເກີດຂຶ້ນໂດຍທີ່ບໍ່ໄດ້ຕັ້ງໃຈ ຫລື ຕັ້ງໃຈກໍຕາມ ຫາກເປັນສິ່ງທີ່ບໍ່ດີກໍລ້ວນແຕ່ສົ່ງຜົນກະທົບຕໍ່ບຸກຄົນຢ່າງຫລີກລ່ຽງບໍ່ໄດ້ ດ້ວຍເຫດນັ້ນ ຈຶ່ງໃຊ້ຊີວິດຢ່າງມີສະຕິ, ມີເຫດຜົນ, ມີການພິຈາລະນາ ເພາະເສັ້ນທາງເດີນມີຫລາຍເສັ້ນ ແຕ່ຈະເດີນໄປເສັ້ນທາງໃດນັ້ນ ຂຶ້ນກັບຕົວເຮົາ ແລະ ຕ້ອງເດີນໃນທາງທີ່ຈະພາເຮົາໄປສູ່ຄວາມຈະເລີນກ້າວໜ້າ ເພື່ອພັດທະນາຕົນໃຫ້ມີຄວາມສີວິໄລ.




# ໂຈລະສາດ

**# ໂດຍ: ໂອທອງ ຄຳອິນຊູ**

❈ ຫຼືຍ້ອນ ເຮົາບໍ່ກ້າ
ຜິດເທື່ອດຽວພຽນສອນ
ບັດວ່າ ໂຈໂລລື້ງ
ເປັນຊ່ຽວຊານມາກຂຶ້ນ
ລົງໂທດຈອມໂຈນ
ເພື່ອເອົາຄົນໄວ້
ເລີຍລວນລາມລ່ວງ
ຮຽນຮູ້ສາດສູງ

❈ ຖືກຈັບ ປານວ່າໄດ້
ຄຳອົບຣົມຮອງຮັບ
ລົງຂ່າວ ຍັງບັງໜ້າ
ບໍ່ໃຫ້ຄົນອື່ນຮູ້
ຮຽນຕໍ່ປະລິນຍາ
ຜ່ານຄະດີເສີມຊັ້ນ
ບັງຕາຊອນເຊື່ອງ
ໜໍນີ້ແມ່ນໂຈນ

❈ ໂຈນຈຶ່ງ ຍູທ່າງຍິ້ມ
ແລ້ວເລົ່າ ເລີຍວາງແຜນ
ກາຍເປັນການຮຽນຮູ້
ຜິດເທື່ອລຸນບໍ່ໃຫ້
ຊົມຊື່ນຊວງສະອອນ
ກໍ່ກຳເລີງເລື້ອຍ
ໃນທາງໂຈລະສາດ
ມັນຊ້ຳແບບເດີມ

❈ ໂຈນເລີ່ມດີເດັ່ນໄດ້
ໃນເມື່ອ ມີເງິນຫຼາຍ
ບາງຄົນເຫັນຫຼົງຍ້ອງ
ແຕ່ຫົວໃຈແປດເປື້ອນ
ດູສະຫງ່າງາມໂສມ
ແຕ່ງອົງຊົງໂກ້
ຍາມແຍງກາຍສະອາດ
ສະເອືອນເອົ້າອຶດໃນ

❈ ຄົນກະເທີນຈຶ່ງໄດ້
ໝາຍຢາກຮຽນໂຈໂລ
ທຳອິດ ຮຽນພຽງຫ້ອງ
ແອບເອົານຳຮຸ່ນອ້າຍ
ເຫັນພາບພຽງກາຍ
ເພື່ອເປັນຄົນໂກ້
ບຳລຸງສາກ່ອນ
ເລີຍລຶ້ງໂລບໂລ

❈ ໂຈລະສາດຊັ້ນ
ເຖິງບໍ່ມີໂຮງຮຽນ
ແຕ່ວ່າ ໂຈໂລນັ້ນ
ຈຶ່ງລັດຕົວເກືອກໃກ້
ຮຽນຈາກຕົວຈິງ
ສິ່ງເສີມສອນສ້າງ
ມັນມີໃຈຊື່ວ
ອະບາຍເບື້ອງເບື່ອເມົາ ແທ້ແລ້ວ!

# ສັນຍານອັນຕະລາຍ




## ສຸກສະບາຍທາຍໂຣດາ

ສິ່ງແວດລ້ອມອ້ອມຂ້າງໃນປັດຈຸບັນ ບໍ່ວ່າຈະເປັນການຮຽນ ຫລື ການເຮັດວຽກ ລ້ວນແຕ່ສ້າງຄວາມເມື່ອຍລ້າ, ຕຶງຄຽດ ແລະ ກົດດັນ ໃຫ້ແກ່ເຮົາບໍ່ຫລາຍກໍໜ້ອຍ ເຊິ່ງມັນຈະຄ່ອຍໆສະສົມສິ່ງເຫລົ່ານັ້ນໄວ້ໃນຮ່າງກາຍ ແລະ ຈິດໃຈຂອງເຮົາ ຈົນເຖິງຈຸດທີ່ມັນສົ່ງສັນຍານອອກມາ ວ່າໃຫ້ຍຸດພຶດຕິກຳເຫລົ່ານັ້ນ ກ່ອນມັນຈະຊ້ຳເກີນໄປ; ໃນຄໍລຳສຸກສະບາຍທາຍໂລຄາສະບັບນີ້ ເຮົາມາຮູ້ຈັກກັບ 6 ສັນຍານອັນຕະລາຍ ທີ່ບົ່ງບອກວ່າເຖິງເວລາທີ່ຄວນພັກຜ່ອນໄດ້ແລ້ວ.

**1. ບໍ່ມີສະມາທິ**

ອາການທຳອິດມັກຈະບໍ່ມີສະມາທິ, ກະວົນກະວາຍ ແລະ ວິຕົກກັງວົນ ອາການເຫລົ່ານີ້ ມັກເກີດຈາກການພັກຜ່ອນບໍ່ພຽງພໍ ແລະ ມີຄວາມວິຕົກກັງວົນຕໍ່ກັບບັນຫາຕ່າງໆທີ່ເກີດຂຶ້ນ.

**2. ນອນຫລັບຍາກ**

ກ່ອນຊິຫລັບບໍ່ແມ່ນເລື່ອງງ່າຍ ແຕ່ຍັງມັກຕື່ນກາງເດິກອີກ ພະຍາຍາມທີ່ຈະຂົ່ມຕາຫລັບແຕ່ກໍບໍ່ສາມາດຫລັບໄດ້ ເຊິ່ງຖ້າເປັນແບບນີ້ດົນໆ ກໍຈະສົ່ງຜົນບໍ່ດີຕໍ່ກັບສຸຂະພາບທາງຮ່າງກາຍ ກໍຄືຈິດໃຈ ສ່ວນຫລາຍມັກເກີດຈາກຄວາມຕຶງຄຽດ ຫລື ວິຕົກກັງວົນ ກັບບັນຫາທີ່ພົບເຈີໃນແຕ່ລະມື້.

**3. ກິນບໍ່ປົກກະຕິ**

ກິນຫລາຍກວ່າປົກກະຕິ ຫລື ກິນໜ້ອຍກວ່າປົກກະຕິ ເຊິ່ງອາການທີ່ເກີດຂຶ້ນໄດ້ຫລາຍທີ່ສຸດກໍຄື ການກິນບໍ່ຕົງເວລາ, ມັກກິນເຂົ້າໜົມ ຫລື ກິນຈຸກກິນຈິກແທນເຂົ້າ ເປັນສັນຍານຂອງຄວາມຕຶງຄຽດຢ່າງໜຶ່ງ ທີ່ເຕືອນໂຕເອງວ່າ ຄວນຍຸດພັກຈາກກິດຈະກຳທີ່ເຮັດໃຫ້ເຮົາຕຶງຄຽດ ແລະ ຄວນພັກຜ່ອນໄດ້ແລ້ວ.

**4. ບໍ່ມີແຮງຈູງໃຈ**

ໝົດກຳລັງໃຈບໍ່ຢາກລຸກໄປເຮັດຫຍັງ ບໍ່ວ່າຈະເປັນການເຮັດວຽກ ຫລືການຮຽນກໍຕາມຈົນເຖິງຂັ້ນບໍ່ຢາກລຸກອອກຈາກຕຽງໄປພົບເຈີຜູ້ຄົນ ບໍ່ຢາກເຮັດຫຍັງທີ່ເຄີຍມັກມາກ່ອນ ອາການເຫລົ່ານີ້ ສ່ວນໃຫຍ່ມາຈາກຄວາມເບື່ອ ຢູ່ໃນຈຸດທີ່ເບື່ອສຸດໆຈົນບໍ່ຢາກເຮັດຫຍັງເລີຍ.

**5. ບໍ່ສະບາຍຕະຫລອດເວລາ**

ຮູ້ສຶກບໍ່ສະບາຍໂຕ, ເຈັບຫົວ, ເຈັບທ້ອງ ແລະ ບໍ່ສະບາຍຕະຫລອດເວລາ ເຊິ່ງເກີດຈາກຄວາມຕຶງຄຽດ, ຄວາມວິຕົກກັງວົນ ແລະ ການພັກຜ່ອນບໍ່ພຽງພໍ ເຊິ່ງອາດຈະສົ່ງກະທົບຕໍ່ພູມຕ້ານທານ ເຮັດໃຫ້ບໍ່ສະບາຍໄດ້ຢ່າງງ່າຍດາຍ.

**6. ບໍ່ມີຄວາມສຸກກັບສິ່ງທີ່ມັກອີກຕໍ່ໄປ**

ຈາກທີ່ເຄີຍມັກເບິ່ງໜັງ-ຟັງເພງ, ມັກໄປນັ່ງຫລິ້ນກິນລົມ ກາຍເປັນບໍ່ມັກອີກຕໍ່ໄປ ຮູ້ສຶກບໍ່ມີຄວາມສຸກອີກຕໍ່ໄປ ອາການເຫລົ່ານີ້ ອາດຈະເປັນອາການຂອງພາວະສິ້ນຍິນດີ ຫລື ພາວະຊຶມເສົ້າກໍໄດ້ ຫາກຮູ້ສຶກແບບນີ້ ຄວນພັກ ຫລື ໄປປຶກສາແພດໝໍ ເພື່ອປິ່ນປົວຕໍ່ໄປ.

ຫາກເກີດອາການເຫລົ່ານີ້ຂຶ້ນກັບໂຕເອງ ທາງທີ່ດີຄວນຫາເວລາໃຫ້ໂຕເອງໄດ້ພັກຜ່ອນ, ລາພັກຈາກວຽກ ແລ້ວໄປທ່ຽວພັກຜ່ອນ, ມີເວລາໃຫ້ກັບໂຕເອງ ຫາກອາການມັນຫລາຍເກີນໄປຈົນບໍ່ສາມາດແກ້ໄຂໄດ້ດ້ວຍໂຕເອງ ກໍຄວນໄປປຶກສາແພດໝໍຈະເປັນການດີທີ່ສຸດ.



## ສະເໜີ...

ສະບັບເລກທີ 53/ປສລ, ລົງວັນທີ 7 ກັນຍາ 1990 ຈຶ່ງໄດ້ຖືກຍົກຂຶ້ນເປັນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ໃນປີ 2014 ໂດຍກົດໝາຍສະບັບດັ່ງກ່າວນີ້ໄດ້ຖືກສ້າງຂຶ້ນໃນເງື່ອນໄຂທີ່ ສປປລາວ ມີການເປີດກວ້າງການພົວພັນດ້ານການຄ້າ, ການລົງທຶນກັບຕ່າງປະເທດຢ່າງຫລວງຫລາຍ, ມີກະແສເງິນຕາຕ່າງປະເທດຈໍລະຈອນໃນລະບົບເສດຖະກິດຫລາຍຂຶ້ນ, ໄດ້ຮັບຮອງເອົາການຈັດຕັ້ງປະຕິບັດມາດຕາ 8 ຂອງກົດລະບຽບຂອງກອງທຶນສາກົນ ເພື່ອສ້າງເງື່ອນໄຂໃນການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ, ຄຽງຄູ່ກັບການສ້າງກົດໝາຍດັ່ງກ່າວ, ທະນາຄານແຫ່ງ ສປປ ລາວ ກໍໄດ້ຜັນຂະຫຍາຍສ້າງເປັນນິຕິກຳກຸ່ມກົດໝາຍກ່ຽວຂ້ອງຈຳນວນ 10 ສະບັບ.

ຜ່ານການທົບທວນຄືນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ບັນດານິຕິກຳກຸ່ມກົດໝາຍກ່ຽວຂ້ອງທີ່ໄດ້ນຳໃຊ້ມາເປັນເວລາເກືອບ 7 ປີນັ້ນ ເຫັນໄດ້ວ່າກົດໝາຍສະບັບດັ່ງກ່າວໄດ້ສ້າງການຫັນປ່ຽນທີ່ດີຫລາຍຢ່າງໃນສັງຄົມລາວ ຕົ້ນຕໍແມ່ນໄດ້ສົ່ງເສີມໃຫ້ສັງຄົມມີການຫັນປ່ຽນມານຳໃຊ້ເງິນກີບຫລາຍຂຶ້ນ ສະແດງອອກຄື ອັດຕາສ່ວນເງິນຕາຕ່າງປະເທດຕໍ່ເງິນຝາກທັງໝົດໄດ້ຫລຸດລົງຈາກ 68,01% ໃນປີ 2005 ມາເປັນ 59,17% ໃນປີ 2021; ໄດ້ຊ່ວຍໃຫ້ການຄຸ້ມຄອງເງິນຕາຕ່າງປະເທດມີລັກສະນະລວມສູນ ເຂົ້າສູ່ລະບົບທະນາຄານຫລາຍຂຶ້ນ ເມື່ອທຽບກັບໄລຍະທີ່ຍັງບໍ່ທັນມີກົດໝາຍດັ່ງກ່າວ ສະແດງອອກຄື: ນັກລົງທຶນຕ່າງປະເທດນຳທຶນມາຍັ້ງຢືນຕາມລະບຽບການ ເພີ່ມຂຶ້ນຈາກ 2,52 ຕື້ໂດລາທຽບເທົ່າ (2010-2014) ມາເປັນ 3,51 ຕື້ໂດລາທຽບເທົ່າ ໃນປີ 2015-2019 ຫລື ເພີ່ມຂຶ້ນ 39%, ສາມາດເກັບກຳຫົວໜ່ວຍທຸລະກິດພາຍໃນທີ່ກູ້ຢືມເງິນຈາກຕ່າງປະເທດ ເພີ່ມຂຶ້ນຈາກ 7,28 ຕື້ໂດລາທຽບເທົ່າ (2009-2014) ມາເປັນ 13,09 ຕື້ໂດລາທຽບເທົ່າ ໃນປີ 2015-2019 ຫລື ເພີ່ມຂຶ້ນ 80%, ປະລິມານເງິນຕາຕ່າງປະເທດທີ່ທະນາຄານທຸລະກິດສາມາດເກັບຊື້ໄດ້ຈາກລູກຄ້າເພີ່ມຂຶ້ນ ຄື: ເກັບຊື້ໄດ້ສະເລ່ຍ 2,9 ຕື້ໂດລາທຽບເທົ່າ ຕໍ່ປີ ໃນໄລຍະປີ 2016-2020 ຈາກທີ່ເຄີຍເກັບຊື້ໄດ້ສະເລ່ຍ 1,5 ຕື້ໂດລາທຽບເທົ່າ ຕໍ່ປີ ໃນໄລຍະປີ 2009-2014. ແຕ່ເຖິງຢ່າງໃດກໍຕາມ, ໃນໄລຍະຜ່ານມາການຄຸ້ມຄອງເງິນຕາຕ່າງປະເທດ ຢູ່ ສປປລາວ ຍັງປະເຊີນກັບຫລາຍສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກ ໂດຍສະເພາະໃນໄລຍະທີ່ແຫລ່ງລາຍຮັບເປັນເງິນຕາຕ່າງປະເທດຂອງ ສປປລາວ ຫລຸດລົງຫລາຍ ບໍ່ສົມດຸນກັບລະດັບຄວາມຕ້ອງການເງິນຕາຕ່າງປະເທດໃນການຊຳລະໃຫ້ຕ່າງປະເທດ ທີ່ຢູ່ໃນລະດັບສູງຕໍ່ເນື່ອງເປັນຕົ້ນ:

1. ການຄຸ້ມຄອງກະແສເງິນຕາຕ່າງປະເທດເຂົ້າ-ອອກ ສປປລາວ ຈາກການສົ່ງອອກສິນຄ້າ ຕາມທີ່ກຳນົດໃນກົດໝາຍບໍ່ສາມາດປະຕິບັດໄດ້ເຕັມສ່ວນ ສະແດງອອກຄື: ໃນໄລຍະປີ 2016-2020 ສປປລາວ ມີມູນຄ່າການສົ່ງອອກທັງໝົດ 26,44 ຕື້ໂດລາ ແຕ່ມູນຄ່າເງິນຕາຕ່າງປະເທດທີ່ໂອນເຂົ້າ ສປປລາວ ຜ່ານລະບົບທະນາຄານມີພຽງແຕ່ 21,78% ຂອງມູນຄ່າການສົ່ງອອກນັ້ນ ຫລື ປະມານ 5,76 ຕື້ໂດລາ ໃນໄລຍະ 2021-ໄຕມາດ 1/2022 ສປປລາວ ມີມູນຄ່າການສົ່ງອອກທັງໝົດ 9,81 ຕື້ໂດລາ ແຕ່ມູນຄ່າເງິນຕາຕ່າງປະເທດທີ່ໂອນເຂົ້າ ສປປລາວ ຜ່ານລະບົບທະນາຄານມີພຽງແຕ່ 32,84% ຂອງມູນຄ່າການສົ່ງອອກນັ້ນ ຫລື ປະມານ 3,22 ຕື້ໂດລາ; ໃນນີ້, ມູນຄ່າການສົ່ງອອກຜະລິດຕະພັນບໍ່ແຮ່ ມີທັງໝົດ 2,06 ຕື້ໂດລາ ແຕ່ມີເງິນໂອນເຂົ້າປະເທດຕົວຈິງພຽງແຕ່ 65,62% ຫລື ປະມານ 1,35 ຕື້ໂດລາ; ມູນຄ່າການສົ່ງອອກກະແສໄຟຟ້າ ມີທັງໝົດ 2,58 ຕື້ໂດລາ ແຕ່ມີເງິນໂອນເຂົ້າປະເທດພຽງແຕ່ 13,70% ຫລື ປະມານ 0,35 ຕື້ໂດລາ; ມູນຄ່າການສົ່ງອອກຜະລິດຕະພັນກະສິກຳ ມີທັງໝົດ 1,29 ຕື້ໂດລາ ແຕ່ມີເງິນໂອນເຂົ້າປະເທດພຽງແຕ່ 18,91% ຫລື ປະມານ 0,24 ຕື້ໂດລາ;

2. ການຄຸ້ມຄອງເງິນລົງທຶນໂດຍກົງຈາກຕ່າງປະເທດ (FDI) ຍັງບໍ່ເປັນລະບົບ ແລະ ບໍ່ທັນມີລັກສະນະຍືນຍົງເທົ່າທີ່ຄວນ; ໃນນີ້, ເງິນລົງທຶນໃນຮູບແບບທຶນມີເອງ (Equity) ມີທ່າອ່ຽງຫລຸດລົງຫລາຍ ໃນຂະນະທີ່ເງິນທຶນໃນຮູບແບບເງິນກູ້ (Debt) ມີທ່າອ່ຽງເພີ່ມຂຶ້ນ, FDI ຈຳນວນບໍ່ໜ້ອຍບໍ່ປະຕິບັດລະບອບການລາຍງານ, ການຂໍອະນຸຍາດກູ້ຢືມເງິນຈາກຕ່າງປະເທດ ແລະ ອື່ນໆ;

3. ຍັງມີການນຳໃຊ້ເງິນຕາຕ່າງປະເທດຊະຊາຍໃນສັງຄົມ ໂດຍສະເພາະໃນບາງເຂດເສດຖະກິດພິເສດ, ເຂດການຄ້າຊາຍແດນ;

4. ຍັງມີການເຄື່ອນໄຫວທຸລະກິດແລກປ່ຽນເງິນຕາທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ;

5. ໜີ້ສິນຕໍ່ຕ່າງປະເທດຂອງພາກລັດ, ສະຖາບັນການເງິນ ແລະ ເອກະຊົນອື່ນໆ ມີທ່າອ່ຽງເພີ່ມສູງຂຶ້ນຕໍ່ເນື່ອງ ສ້າງແຮງກົດດັນຕໍ່ຖານະການຊຳລະກັບຕ່າງປະເທດຂອງຊາດ ໃນເງື່ອນໄຂທີ່ລາຍຮັບເປັນເງິນຕາຕ່າງປະເທດຂອງປະເທດຍິ່ງຈຳກັດ ສ້າງຄວາມກົດດັນຕໍ່ຄ່າເງິນກີບ ແລະ ສົ່ງຜົນຕໍ່ຄວາມຍືນຍົງດ້ານເສດຖະກິດມະຫາພາກຂອງປະເທດ.

ຈາກສະພາບດັ່ງກ່າວເຫັນວ່າ ກົດໝາຍສະບັບປັດຈຸບັນ ຍັງບໍ່ທັນສາມາດເຮັດໜ້າທີ່ໃນການສ້າງຄວາມເຂັ້ມແຂງໃຫ້ການຊຳລະກັບຕ່າງປະເທດ, ຖານະຄັງສຳຮອງເງິນຕາຕ່າງປະເທດ ແລະ ການດຳເນີນນະໂຍບາຍອັດຕາແລກປ່ຽນ ກໍຄືການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ໃຫ້ບັນລຸໄດ້ດັ່ງຄາດໝາຍທີ່ໄດ້ວາງໄວ້ ເຊິ່ງສາເຫດຕົ້ນຕໍແມ່ນຍ້ອນ:

1. ເນື້ອໃນຂອງກົດໝາຍສະບັບປັດຈຸບັນ ບໍ່ທັນຮັດກຸມໂດຍສະເພາະການແບ່ງຄວາມຮັບຜິດຊອບລະຫວ່າງຂະແໜງການ, ສູນກາງທ້ອງຖິ່ນ ໃນການຄຸ້ມຄອງເງິນຕາຕ່າງປະເທດ, ການກຳນົດມາດຕະການທາງດ້ານບໍລິຫານ ບໍ່ທັນຮັດກຸມຄົບຖ້ວນ;

2. ການຜັນຂະຫຍາຍນິຕິກຳລຸ່ມກົດໝາຍ ບໍ່ທັນພຽງພໍ, ບໍ່ທັນສະພາບ, ພ້ອມນີ້, ດ້ານໂຄງສ້າງ ແລະ ເນື້ອໃນຂອງບາງນິຕິກຳລຸ່ມກົດໝາຍຍັງບໍ່ກົມກຽວ ແລະ ຍາກໃນການຈັດຕັ້ງປະຕິບັດ ເມື່ອສົມທຽບກັບກົດໝາຍຫລັກ;

3. ຄວາມອາດສາມາດໃນການຄຸ້ມຄອງຕົວຈິງຂອງທະນາຄານແຫ່ງ ສປປລາວ ຍັງບໍ່ທັນສົມຄູ່ກັບຄວາມຮຽກຮ້ອງຕ້ອງການ ແລະ ສະພາບທີ່ເກີດຂຶ້ນຕົວຈິງໃນສັງຄົມ, ເຄື່ອງມື ແລະ ກົນໄກໃນການຄຸ້ມຄອງ, ຕິດຕາມກະແສເງິນໄຫລເຂົ້າ-ອອກທີ່ເປັນເງິນຕາຕ່າງປະເທດ ຍັງຈຳກັດ, ບໍ່ຊັດເຈນ, ບໍ່ທົ່ວເຖິງ ແລະ ບໍ່ທັນສະພາບ, ກົນໄກປະສານແລກປ່ຽນຂໍ້ມູນກັບຂະແໜງການກ່ຽວຂ້ອງບໍ່ທັນເປັນລະບົບຄົບຖ້ວນ;

4. ຄວາມເອົາໃຈໃສ່ຂອງຂະແໜງການກ່ຽວຂ້ອງ ໃນການຄຸ້ມຄອງເງິນຕາຕ່າງປະເທດ ກໍຄືການຈັດຕັ້ງປະຕິບັດນິຕິກຳກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ບໍ່ທັນເຂັ້ມງວດ ແລະ ກົມກຽວ ເທົ່າທີ່ຄວນ ເປັນຕົ້ນການປະສານສົມທົບ-ແລກປ່ຽນຂໍ້ມູນ, ການກຳນົດກົນໄກຄຸ້ມຄອງຮ່ວມລະຫວ່າງຂະແໜງການຍັງມີລັກສະນະປະຖິ້ມປະຖານ, ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຍັງເຮັດໄດ້ບໍ່ດີເທົ່າທີ່ຄວນ ແລະ ບໍ່ທັນສະພາບ;

5. ພື້ນຖານການຜະລິດພາຍໃນປະເທດຍັງອ່ອນນ້ອຍ ຍັງເພິ່ງພາອາໄສການນຳເຂົ້າເປັນສ່ວນໃຫຍ່ແລະຄ່ານິຍົມໃນການນຳໃຊ້ສິນຄ້າພາຍໃນຍັງມີໜ້ອຍ, ຄວາມຕ້ອງການໃນການຊຳລະກັບຕ່າງປະເທດມີສູງກວ່າແຫລ່ງລາຍຮັບທີ່ເປັນເງິນຕາຕ່າງປະເທດ ມາຢ່າງຕໍ່ເນື່ອງ ແລະ ຍາວນານ, ຄ່ານິຍົມ ແລະ ຄວາມຕ້ອງການຖືຄອງເງິນຕາຕ່າງປະເທດຍັງຢູ່ໃນລະດັບສູງ.

ສະນັ້ນ, ເພື່ອປັບປຸງບັນດາຂໍ້ຄົງຄ້າງທີ່ໄດ້ກ່າວມານັ້ນ ເຮັດໃຫ້ການຄຸ້ມຄອງເງິນຕາຕ່າງປະເທດຢູ່ ສປປ ລາວ ໄດ້ຮັບປະສິດທິຜົນດີຂຶ້ນ ແລະ ບັນລຸໄດ້ຕາມຄາດໝາຍຕິດພັນກັບວຽກງານຈຸດສຸມທີ 4: ການສ້າງສະຖຽນລະພາບດ້ານເງິນຕາ ເປັນຕົ້ນການຄວບຄຸມອັດຕາເງິນເຟີ້, ຄຸ້ມຄອງອັດຕາແລກປ່ຽນ, ສ້າງຄັງສຳຮອງເງິນຕາຕ່າງປະເທດ, ຫລຸດຜ່ອນໜີ້ທີ່ບໍ່ເກີດດອກອອກຜົນ, ສ້າງການຫັນປ່ຽນໃໝ່ໃນລະບົບຄຸ້ມຄອງເງິນຕາຕ່າງປະເທດໃຫ້ເຂັ້ມແຂງເພື່ອສາມາດຊຳລະສະສາງກັບສາກົນ ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021, ທະນາຄານແຫ່ງ ສປປ ລາວ ຈຶ່ງເຫັນວ່າລັດຖະບານມີຄວາມຈຳເປັນໃນການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດສະບັບທີ່ນຳໃຊ້ໃນປັດຈຸບັນ.

### II. ການຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປລາວ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບປັບປຸງກົດໝາຍສະບັບດັ່ງກ່າວຂຶ້ນ ໂດຍມີຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຫົວໜ້າຄະນະ, ພະນັກງານຈາກກົມກ່ຽວຂ້ອງຂອງທະນາຄານແຫ່ງ ສປປລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍໄດ້ເລີ່ມຄົ້ນຄວ້ານັບແຕ່ເດືອນກໍລະກົດ 2021 ເປັນຕົ້ນມາ ເຊິ່ງໄດ້ມີການສຶກສາຄົ້ນຄວ້າວິເຄາະບັນຫາ ແລະ ກຳນົດທິດທາງໃນການປັບປຸງກົດໝາຍ ພ້ອມທັງຖອດຖອນບົດຮຽນຈາກການຈັດຕັ້ງປະຕິບັດກົດໝາຍ ແລະ ບັນດານິຕິກຳລຸ່ມກົດໝາຍໃນໄລຍະຜ່ານມາ ໄປຄຽງຄູ່ກັບການສຶກສາຄົ້ນຄວ້າບັນດານິຕິກຳຂອງປະເທດອ້ອມຂ້າງ, ປະເທດທີ່ມີເງື່ອນໄຂຄ້າຍຄືກັບ ສປປລາວ ແລະ ປະເທດທີ່ພັດທະນາແລ້ວ ເຊັ່ນ: ສສ. ຫວຽດນາມ, ສປ.ຈີນ, ກຳປູເຈຍ, ມາເລເຊຍ, ອິນໂດເນເຊຍ, ຟີລິບປິນ, ໄທ, ມຽນມາ, ສິງກະໂປ ແລະ ປະເທດອື່ນໆ, ຂະບວນການຄົ້ນຄວ້າໄດ້ດຳເນີນທາບທາມຄຳເຫັນເປີດກວ້າງກັບຂະແໜງການກ່ຽວຂ້ອງ ແລະ ຫລາຍກຸ່ມຄົນໃນສັງຄົມ ດ້ວຍການສຳຫລວດຄຳເຫັນ ໂດຍຜ່ານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວກ່ຽວກັບບັນຫາສຳຄັນຕິດພັນກັບການນຳໃຊ້ ແລະ ຄຸ້ມຄອງເງິນຕາຕ່າງປະເທດ, ຫລັງຈາກນັ້ນ, ກໍໄດ້ຮ່ວມເຮັດວຽກກັບກະຊວງຍຸຕິທຳ ເພື່ອກວດກາຄວາມສອດຄ່ອງທາງດ້ານກົດໝາຍ ແລະ ໄດ້ນຳສະເໜີຕໍ່ລັດຖະບານພິຈາລະນາໃນເດືອນມັງກອນ 2022 ເຊິ່ງໄດ້ຮັບຄຳເຫັນຈຳນວນໜຶ່ງ. ໃນເດືອນເມສາ 2022 ກໍໄດ້ສົມທົບກັບສະພາແຫ່ງຊາດ ເພື່ອກວດກາຮອບດ້ານຕໍ່ເນື້ອໃນຂອງຮ່າງກົດໝາຍ ໂດຍການເປັນປະທານຂອງທ່ານຮອງປະທານສະພາແຫ່ງຊາດ ພ້ອມທັງໄດ້ທາບທາມຄຳເຫັນນຳສະມາຊິກສະພາປະຊາຊົນຂັ້ນແຂວງ, ນອກຈາກນີ້ ກໍໄດ້ນຳສະເໜີຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສຳມະນາວິຊາການ ນຳສະມາຊິກສະພາແຫ່ງຊາດ ໃນເດືອນມິຖຸນາ 2022.

### III. ໂຄງປະກອບຂອງຮ່າງກົດໝາຍສະບັບປັບປຸງ ແລະ ບາງເນື້ອໃນຕົ້ນຕໍທີ່ໄດ້ປັບປຸງ

ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ປະກອບດ້ວຍ IX ພາກ, 8 ໝວດ, 62 ມາດຕາ (ເອກະສານຄັດຕິດ) ຈາກສະບັບປັດຈຸບັນທີ່ປະກອບມີ IX ພາກ, 8 ໝວດ ແລະ 54 ມາດຕາ, ໃນນີ້, ໄດ້ປັບປຸງເນື້ອໃນ 32 ມາດຕາ, ໄດ້ຕັດເນື້ອໃນ 12 ມາດຕາ ແລະ ຍ້າຍເນື້ອໃນຂອງບາງມາດຕາ ສັບຊ້ອນເຂົ້າໃນເນື້ອໃນຂອງມາດຕາອື່ນ, ເພີ່ມເຂົ້າໃໝ່ 24 ມາດຕາ ແລະ ຍັງຮັກສາເນື້ອໃນເກົ່າ 6 ມາດຕາ; ເຊິ່ງເນື້ອໃນສຳຄັນທີ່ໄດ້ປັບປຸງ ມີດັ່ງນີ້:

ຈຸດປະສົງຂອງການປັບປຸງກົດໝາຍໃນຄັ້ງນີ້ ແມ່ນເພື່ອເປັນເຄື່ອງມືໃນການຄຸ້ມຄອງເງິນຕາຕ່າງປະເທດຢູ່ ສປປລາວ ໃຫ້ມີປະສິດທິຜົນຫລາຍຂຶ້ນ ໃນເງື່ອນໄຂທີ່ຮູບແບບການເຊື່ອມໂຍງດ້ານເສດຖະກິດ-ການເງິນລະຫວ່າງປະເທດ ນັບມື້ນັບຫລາກຫລາຍ ແລະ ສະຫລັບສັບຊ້ອນ; ໃຫ້ສາມາດຄຸ້ມຄອງເງິນຕາຕ່າງປະເທດໄດ້ລວມສູນເຂົ້າສູ່ລະບົບຫລາຍຂຶ້ນ, ສ້າງປະໂຫຍດສູງສຸດໃຫ້ແກ່ປະເທດຊາດ ໃຫ້ແກ່ປະຊາຊົນ; ຫລຸດຜ່ອນການນຳໃຊ້ເງິນຕາຕ່າງປະເທດຊະຊາຍ ແລະ ຫລາຍສະກຸນເງິນຕາໃນສັງຄົມ; ປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ລະບົບສະຖາບັນການເງິນຂອງ ສປປ ລາວ ແລະ ປະກອບສ່ວນຊ່ວຍສ້າງຄວາມເຂັ້ມແຂງດ້ານຖານະການຊຳລະກັບຕ່າງປະເທດໃຫ້ແກ່ປະເທດ.

**1. ພາກທີ I ບົດບັນຍັດທົ່ວໄປ** ປະກອບດ້ວຍ 7 ມາດຕາ (ປັບປຸງ 7 ມາດຕາ, ຕັດ 1 ມາດຕາອອກ) ຕົ້ນຕໍແມ່ນໄດ້ມີການປັບປຸງໃຫ້ຈຸດປະສົງການນຳໃຊ້ກົດໝາຍ ແລະ ການອະທິບາຍຄຳສັບທີ່ສຳຄັນຈຳເປັນມີຄວາມລະອຽດ ແລະ ຈະແຈ້ງຂຶ້ນ;

**2. ພາກທີ II ການຄອບຄອງ, ການນຳໃຊ້ເງິນຕາຕ່າງປະເທດ ແລະ ການແລກປ່ຽນເງິນຕາ ຢູ່ ສປປ ລາວ** ປະກອບດ້ວຍ 3 ມາດຕາ (ປັບປຸງ 3 ມາດຕາ) ເຊິ່ງຖືເປັນພາກສຳຄັນທີ່ສຸດຂອງກົດໝາຍສະບັບນີ້ ໂດຍໄດ້ມີການປັບປຸງໃຫ້ເນື້ອໃນມີລັກສະນະທີ່ຈະແຈ້ງ ແລະ ເຂົ້າໃຈງ່າຍຂຶ້ນ, ມາດຕາ 9 (ການນຳໃຊ້ເງິນຕາຕ່າງປະເທດ) ແມ່ນຍັງຮັກສາເນື້ອໃນເດີມໄວ້ຄືເກົ່າ ຄື: ກ່ອນຈະນຳໃຊ້ເງິນຕາຕ່າງປະເທດເຂົ້າໃນການຮັບຊຳລະ ແລະ ຊຳລະຄ່າສິນຄ້າ, ບໍລິການ, ໜີ້ສິນ, ເບີກຈ່າຍເງິນເດືອນ ຫລື ຄ່າແຮງງານ ແລະ ປະຕິບັດພັນທະຕໍ່ລັດ ໃນ ສປປລາວ ຕ້ອງແລກປ່ຽນເປັນເງິນກີບ; ແຕ່ເພື່ອໃຫ້ມີຄວາມຍືດຢຸ່ນໃນການຈັດຕັ້ງປະຕິບັດ ກໍໄດ້ກຳນົດເນື້ອໃນທີ່ມີລັກສະນະສະເພາະໂດຍມອບສິດໃຫ້ລັດຖະບານເປັນຜູ້ກຳນົດນະໂຍບາຍສະເພາະໃນການນຳໃຊ້ເງິນຕາຕ່າງປະເທດຢູ່ ສປປລາວ ເຂົ້າຕື່ມຄື: ລັດຖະບານ ສາມາດກຳນົດນະໂຍບາຍສະເພາະ ໃນການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປລາວ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດໃນແຕ່ລະໄລຍະ ໂດຍໃຫ້ທະນາຄານແຫ່ງ ສປປລາວ ເປັນຜູ້ອອກລະບຽບການເພື່ອຈັດຕັ້ງປະຕິບັດ. ການກຳນົດຄືດັ່ງກ່າວ ແມ່ນແນໃສ່ການຄຸ້ມຄອງເງິນຕາຕ່າງປະເທດ ຢູ່ເຂດເສດຖະກິດພິເສດ ແລະ ເຂດການຄ້າຊາຍແດນ;

**3. ພາກທີ III ການຊຳລະກັບປະເທດ** ແມ່ນພາກທີ່ປະກອບຂຶ້ນບົນພື້ນຖານການປັບປຸງເນື້ອໃນທີ່ຕິດພັນກັບມາດຕາ 10, 13, 14, 15, 16, 17, 21, 22, 23, 24, 25 ຂອງກົດໝາຍສະບັບປັດຈຸບັນ ແລະ ໄດ້ມີການຈັດແບ່ງໝວດອອກເປັນຕາມແຕ່ລະກິດຈະກຳທາງເສດຖະກິດລະຫວ່າງປະເທດ ເພື່ອໃຫ້ເຂົ້າໃຈງ່າຍຂຶ້ນ ແລະ ມີຄວາມສະດວກຫລາຍຂຶ້ນໃນການຈັດຕັ້ງປະຕິບັດ, ໃນພາກນີ້ປະກອບມີ 6 ໝວດຄື:

**- ໝວດທີ 1 ການຄ້າ ແລະ ບໍລິການ ກັບຕ່າງປະເທດ** ປະກອບດ້ວຍ 2 ມາດຕາ (ໃໝ່ 2 ມາດຕາ) ເຊິ່ງກຳນົດກົນໄກການຄຸ້ມຄອງກະແສເງິນທີ່ຕິດພັນນຳການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ດ້ວຍການກຳນົດໃຫ້ຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ທີ່ມີພູມລຳເນົາຢູ່ ສປປລາວ ຕ້ອງມີບັນຊີເງິນຝາກສະເພາະ ນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປລາວ, ຜູ້ສົ່ງອອກສິນຄ້າຕ້ອງນຳລາຍຮັບເປັນເງິນຕາຕ່າງປະເທດເຂົ້າມາ ສປປລາວ, ຂາຍໃຫ້ທະນາຄານທຸລະກິດສາມາດສະເໜີຈາກທະນາຄານທຸລະກິດ ເມື່ອຈຳເປັນ, ກຳນົດໃຫ້ທະນາຄານແຫ່ງ ສປປລາວ ຕ້ອງອອກນິຕິກຳລຸ່ມກົດໝາຍຈະແຈ້ງ ເພື່ອຄຸ້ມຄອງບັນຫາດັ່ງກ່າວ;

**- ໝວດທີ 2 ລາຍຮັບ ແລະ ເງິນຊ່ວຍເຫຼືອລ້າ ລະຫວ່າງປະເທດ** ປະກອບດ້ວຍ 4 ມາດຕາ (ປັບປຸງ 1 ມາດຕາ, ໃໝ່ 3 ມາດຕາ) ແນໃສ່ເພື່ອຄຸ້ມຄອງກະແສເງິນຕາຕ່າງປະເທດ ທີ່ຕິດພັນກັບລາຍຮັບລະຫວ່າງແຮງງານຂອງລາວທີ່ໄປເຮັດວຽກຢູ່ຕ່າງປະເທດ ແລະ ແຮງງານຕ່າງປະເທດທີ່ມາເຮັດວຽກຢູ່ ສປປລາວ, ສຳລັບເງິນທີ່ໄດ້ຮັບຈາກການຊ່ວຍເຫລືອລ້າ ແມ່ນໃຫ້ດຳເນີນການໂອນຜ່ານຜູ້ໃຫ້ບໍລິການຊຳລະ

**- ໝວດທີ 3 ການລົງທຶນໂດຍກົງລະຫວ່າງປະເທດ** ປະກອບດ້ວຍ 3 ມາດຕາ (ປັບປຸງ 2 ມາດຕາ, ໃໝ່ 1 ມາດຕາ) ແນໃສ່ເພື່ອຄຸ້ມຄອງກະແສເງິນຕາຕ່າງປະເທດ ທີ່ຕິດພັນກັບການລົງທຶນໂດຍກົງຈາກຕ່າງປະເທດ ໃຫ້ເປັນລະບົບ ແລະ ມີລັກສະນະລວມສູນ ຢູ່ລະບົບທະນາຄານຫລາຍຂຶ້ນ ດ້ວຍການກຳນົດໃຫ້ຜູ້ລົງທຶນຕ່າງປະເທດຕ້ອງເປີດບັນຊີເງິນຝາກສະເພາະ ເພື່ອຮອງຮັບເງິນລົງທຶນດັ່ງກ່າວ ນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປລາວ ພາຍຫລັງທີ່ໄດ້ແຈ້ງຂຶ້ນທະບຽນວິສາຫະກິດ;

**- ໝວດທີ 4 ການລົງທຶນໃນຫລັກຊັບ** ປະກອບດ້ວຍ 4 ມາດຕາ (ໃໝ່ 4 ມາດຕາ) ແນໃສ່ເພື່ອຄຸ້ມຄອງກະແສເງິນຕາຕ່າງປະເທດ ທີ່ຕິດພັນກັບການລົງທຶນໃນຫລັກຊັບຢູ່ ສປປ ລາວ ເຊິ່ງຕ້ອງປະຕິບັດຕາມກົດໝາຍວ່າດ້ວຍຫລັກຊັບ ແລະ ການລົງທຶນໃນຫລັກຊັບຢູ່ຕ່າງປະເທດ ຕ້ອງຂໍອະນຸຍາດນຳຄະນະກຳມະການຄຸ້ມຄອງຫລັກຊັບ;

**- ໝວດທີ 5 ການກູ້ຢືມລະຫວ່າງປະເທດ** ປະກອບດ້ວຍ 6 ມາດຕາ (ປັບປຸງ 2 ມາດຕາ, ໃໝ່ 4 ມາດຕາ) ເຊິ່ງກຳນົດກົນໄກຄຸ້ມຄອງການກູ້ຢືມຂອງລັດຖະບານ ໂດຍໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ, ສຳລັບການກູ້ຢືມຂອງພາກສ່ວນອື່ນທີ່ບໍ່ແມ່ນລັດຖະບານ (ສະຖາບັນການເງິນ, ຫົວໜ່ວຍວິສາຫະກິດອື່ນ ແລະ ບຸກຄົນ) ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປລາວ ເຊິ່ງການໃຫ້ ຫລື ຮັບເງິນກູ້ຢືມດັ່ງກ່າວ ຕ້ອງດຳເນີນຜ່ານລະບົບທະນາຄານເທົ່ານັ້ນ, ນອກຈາກນີ້ສິ່ງສຳຄັນທີ່ເພີ່ມເຂົ້າໃໝ່ ແມ່ນການກຳນົດໃຫ້ລັດຖະບານ ຕ້ອງສ້າງຍຸດທະສາດຄຸ້ມຄອງໜີ້ສິນຕໍ່ຕ່າງປະເທດ ເຊິ່ງກວມເອົາໜີ້ສິນຂອງ 3 ພາກສ່ວນ ຄື: ໜີ້ສິນສາທາລະນະ, ໜີ້ສິນຂອງສະຖາບັນການເງິນ, ໜີ້ສິນຂອງວິສາຫະກິດອື່ນ ແລະ ບຸກຄົນ;

**- ໝວດທີ 6 ການຝາກເງິນລະຫວ່າງປະເທດ ແລະ ການນຳເງິນສົດເຂົ້າ-ອອກ ສປປລາວ** ປະກອບດ້ວຍ 3 ມາດຕາ (ຮັກສາ 1 ມາດຕາ, ປັບປຸງ 1 ມາດຕາ, ໃໝ່ 1 ມາດຕາ) ແນໃສ່ເພື່ອເປັນບ່ອນອີງໃຫ້ກັບຜູ້ບໍ່ມີພູມລຳເນົາ ທີ່ຕ້ອງການເປີດບັນຊີຢູ່ ສປປລາວ ແລະ ເພື່ອຮອງຮັບທຸລະກຳທີ່ເກີດຂຶ້ນກ່ອນການໄດ້ຮັບອະນຸຍາດໃຫ້ມີການລົງທຶນຢູ່ ສປປລາວ ເຊິ່ງເມື່ອກ່ອນເນື້ອໃນທີ່ກ່ຽວຂ້ອງແມ່ນໄດ້ລະບຸໄວ້ໃນນິຕິກຳລຸ່ມກົດໝາຍເທົ່ານັ້ນ;

**4. ພາກທີ IV ລະບອບອັດຕາແລກປ່ຽນ, ການບໍລິການເງິນຕາ**

ອ່ານຕໍ່ໜ້າ 8...

# ກົດໝາຍວ່າດ້ວຍຍານພາຫະນະທາງບົກ

ຕໍ່ຈາກສະບັບກ່ອນ...

**ມາດຕາ 61 ເງື່ອນໄຂໃນການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ**

ການດຳເນີນທຸລະກິດກ່ຽວກັບຍານພາຫະນະທາງບົກ ຕ້ອງມີເງື່ອນໄຂພື້ນຕົ້ນ ດັ່ງນີ້:

1. ທຶນ;
2. ສຳນັກງານ ຫຼື ສິ່ງປຸກສ້າງ, ສະຖານທີ່, ວັດຖຸປະກອນ ແລະ ພາຫະນະຮັບໃຊ້ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ;
3. ນັກວິຊາການທີ່ມີປະສົບການ ແລະ ວິຊາສະເພາະທີ່ກ່ຽວຂ້ອງກັບທຸລະກິດຂອງຕົນ;
4. ໃບຢັ້ງຢືນທີ່ຕັ້ງຂອງສຳນັກງານ.

**ມາດຕາ 62 ປະເພດທຸລະກິດກ່ຽວກັບຍານພາຫະນະທາງບົກ**

ປະເພດທຸລະກິດກ່ຽວກັບຍານພາຫະນະທາງບົກ ມີ ດັ່ງນີ້:

1. ການນຳເຂົ້າ ແລະ ສົ່ງອອກ;
2. ການຈຳໜ່າຍ;
3. ການຜະລິດ ແລະ/ຫຼື ປະກອບ;
4. ສູນທົດສອບ;
5. ສູນກວດກາເຕັກນິກ;
6. ອູ່ສ້ອມແປງລົດ;
7. ທຸລະກິດອື່ນກ່ຽວກັບຍານພາຫະນະທາງບົກ.

**ມາດຕາ 63 ທຸລະກິດນຳການເຂົ້າ ແລະ ສົ່ງອອກ ຍານພາຫະນະທາງບົກ**

ທຸລະກິດການນຳເຂົ້າ ແລະ ສົ່ງອອກ ຍານພາຫະນະທາງບົກ ແມ່ນການດຳເນີນທຸລະກິດກ່ຽວກັບການນຳເຂົ້າຍານພາຫະນະທາງບົກ ເພື່ອຂາຍຍົກໃຫ້ຜູ້ດຳເນີນທຸລະກິດການຈຳໜ່າຍຍານພາຫະນະທາງບົກ, ສົ່ງອອກຄືນ, ເປັນຕົວແທນ ຫຼື ຊື້ ຍານພາຫະນະທາງບົກຈາກຜູ້ຜະລິດ, ປະກອບຍານພາຫະນະທາງບົກ ຢູ່ ສປປລາວ ເພື່ອຈຳໜ່າຍຢູ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ.

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ອະນຸຍາດດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະທາງບົກ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 64 ທຸລະກິດການຈຳໜ່າຍຍານພາຫະນະທາງບົກ**

ທຸລະກິດການຈຳໜ່າຍຍານພາຫະນະທາງບົກ ແມ່ນການດຳເນີນທຸລະກິດກ່ຽວກັບການ ຂາຍຍົກ, ຂາຍຍ່ອຍຍານພາຫະນະທາງບົກໃໝ່ ແລະ/ຫຼື ຍານພາຫະນະທາງບົກທີ່ນຳໃຊ້ແລ້ວ ລວມທັງອາໄຫຼ່ ຫຼື ເປັນຕົວແທນຈຳໜ່າຍຍານພາຫະນະທາງບົກ ຍີ່ຫໍ້ໃດໜຶ່ງ ຫຼື ຫຼາຍຍີ່ຫໍ້ ຊຶ່ງບໍ່ສາມາດນຳເຂົ້າ ແລະ ສົ່ງອອກໄດ້.

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ອະນຸຍາດດຳເນີນທຸລະກິດ ການຈຳໜ່າຍຍານພາຫະນະທາງບົກ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 65 ທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ**

ທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ ແມ່ນການດຳເນີນທຸລະກິດກ່ຽວກັບການຜະລິດ ຫຼື ປະກອບ ຫຼື ທັງຜະລິດ ແລະ ປະກອບຍານພາຫະນະທາງບົກໂດຍຜະລິດ, ນຳເຂົ້າ ຫຼື ຊື້ ຊິ້ນສ່ວນ ຈາກຜູ້ຜະລິດຢູ່ພາຍໃນ ຈຳນວນໜຶ່ງ ຫຼື ທັງໝົດ ເພື່ອປະກອບເປັນຍານພາຫະນະທາງບົກສົມບູນ ແລ້ວຈຳໜ່າຍຢູ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ.

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ອະນຸຍາດດຳເນີນທຸລະກິດການຜະລິດ ແລະ/ຫຼື ການປະກອບຍານພາຫະນະທາງບົກ.

**ມາດຕາ 66 ທຸລະກິດສູນທົດສອບຍານພາຫະນະທາງບົກ**

ທຸລະກິດສູນທົດສອບຍານພາຫະນະທາງບົກ ແມ່ນ ການດຳເນີນທຸລະກິດກ່ຽວກັບການທົດສອບຍານ ພາຫະນະເປັນຄັນ, ຊິ້ນສ່ວນ, ວັດສະດຸ ທີ່ນຳມາຜະລິດ ແລະ ປະກອບ ເພື່ອຢັ້ງຢືນຄຸນນະພາບ, ປະສິດທິ ພາບກ່ຽວກັບຍານພາຫະນະທາງບົກ ຕາມມາດຕະຖານເຕັກນິກຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ ໂດຍສອດຄ່ອງກັບມາດຕະຖານສາກົນ ທາງດ້ານຄຸນນະພາບ, ຄວາມປອດໄພ ແລະ ສິ່ງແວດລ້ອມ.

ອ່ານຕໍ່ສະບັບໜ້າ...

ຕໍ່ຈາກໜ້າ 7...

**ຕ່າງປະເທດ, ຕະຫລາດເງິນຕາຕ່າງປະເທດລະຫວ່າງທະນາຄານ ແລະ ການນຳເຂົ້າ-ສົ່ງອອກ ຄຳ** ເປັນພາກທີ່ເພີ່ມເຂົ້າໃໝ່ ປະກອບດ້ວຍ 7 ມາດຕາ (ປັບປຸງ 1 ມາດຕາ, ໃໝ່ 6 ມາດຕາ) ທີ່ກຳນົດເນື້ອໃນກ່ຽວກັບການຄຸ້ມຄອງການບໍລິການເງິນຕາ ແລະ ຕະຫລາດເງິນຕາຕ່າງປະເທດລະຫວ່າງທະນາຄານຕ່າງປະເທດ ເຊິ່ງໄລຍະຜ່ານມາເຖິງວ່າມີການເຄື່ອນໄຫວ ແຕ່ບໍ່ທັນກຳນົດໃນກົດໝາຍ, ອີກດ້ານໜຶ່ງ ການເຄື່ອນໄຫວເຫລົ່ານີ້ລ້ວນແຕ່ມີຜົນກະທົບ ໂດຍກົງຕໍ່ອັດຕາແລກປ່ຽນ ຈຶ່ງຕ້ອງໄດ້ເອົາໃຈໃສ່ລະອຽດໃນຕໍ່ໜ້າ;

**5. ພາກທີ V ດຸນການຊຳລະກັບຕ່າງປະເທດ ແລະ ຄັງສຳຮອງເງິນຕາຕ່າງປະເທດ** ປະກອບດ້ວຍ 3 ມາດຕາ (ປັບປຸງ 2 ມາດຕາ ແລະ ໃໝ່ 1 ມາດຕາ), ສິ່ງສຳຄັນຂອງພາກນີ້ ແມ່ນຕ້ອງສ້າງແຜນດຸນການຊຳລະກັບຕ່າງປະເທດ ໂດຍມີຂໍ້ມູນຈາກຂະແໜງການກ່ຽວຂ້ອງໄວ້ໃນການຄຸ້ມຄອງເງິນຕາຕ່າງປະເທດ;

**6. ພາກທີ VI ຂໍ້ຫ້າມ** ປະກອບດ້ວຍ 3 ມາດຕາ (ປັບປຸງ 3 ມາດຕາ) ໃຫ້ມີເນື້ອໃນທີ່ຮັດກຸມຫລາຍຂຶ້ນ.

**7. ພາກທີ VII ການຄຸ້ມຄອງ ແລະ ກວດກາ ວຽກງານເງິນຕາຕ່າງປະເທດ** ປະກອບມີ 2 ໝວດຄື:

**- ໝວດທີ 1 ການຄຸ້ມຄອງວຽກງານເງິນຕາຕ່າງປະເທດ** ປະກອບດ້ວຍ 3 ມາດຕາ (ປັບປຸງ 3 ມາດຕາ) ແນໃສ່ເພື່ອກຳນົດເນື້ອໃນກ່ຽວກັບສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນທີ່ຮັບຜິດຊອບ ໃນການຄຸ້ມຄອງເງິນຕາຕ່າງປະເທດ ໂດຍສະເພາະແມ່ນບັນດາກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ມີຄວາມຊັດເຈນ ແລະ ລະອຽດຫລາຍຂຶ້ນ ເຊັ່ນ: ກະຊວງການເງິນມີໜ້າທີ່ສະໜອງແຜນການກູ້ຢືມ, ແຜນການຊຳລະໜີ້ສິນ ແລະ ການຄໍ້າປະກັນເງິນກູ້ກັບຕ່າງປະເທດ ໃຫ້ທະນາຄານແຫ່ງ ສປປລາວ; ກະຊວງອຸດສາຫະກຳ ແລະ ການຄ້າ ມີໜ້າທີ່ຊຸກຍູ້ຫົວໜ່ວຍວິສາຫະກິດ ໃນການເປີດບັນຊີເງິນຝາກສະເພາະ, ສະໜອງຂໍ້ມູນເງິນຕາຕ່າງປະເທດ ຕິດພັນກັບການນຳເຂົ້າ-ສົ່ງອອກສິນຄ້າ, ຂໍ້ມູນທະບຽນວິສາຫະກິດ, ການນຳເຂົ້າທຶນທີ່ເປັນເງິນຕາຕ່າງປະເທດ ຂອງຫົວໜ່ວຍວິສາຫະກິດ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີໜ້າທີ່ຊຸກຍູ້ຜູ້ອອກແຮງງານໃຫ້ໂອນເງິນເຂົ້າ-ອອກ ສປປລາວ ຜ່ານຜູ້ໃຫ້ບໍລິການຊຳລະ;

**- ໝວດທີ 2 ການກວດກາວຽກງານເງິນຕາຕ່າງປະເທດ** ປະກອບດ້ວຍ 3 ມາດຕາ (ປັບປຸງ 3 ມາດຕາ) ແນໃສ່ເພື່ອໃຫ້ມີລັກສະນະກະທັດຮັດແຕ່ມີເນື້ອໃນທີ່ແທດເໝາະຫລາຍຂຶ້ນ.

**8. ພາກທີ VIII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ** ປະກອບດ້ວຍ 8 ມາດຕາ (ຮັກສາ 4 ມາດຕາ, ປັບປຸງ 3 ມາດຕາ, ໃໝ່ 1 ມາດຕາ); ເຊິ່ງພື້ນຕົ້ນແມ່ນໄດ້ປັບປຸງມາດຕະການປັບໃໝ່ໃຫ້ສອດຄ່ອງກັບເນື້ອໃນຂອງຂໍ້ຫ້າມ ແລະ ເງື່ອນໄຂທາງດ້ານເສດຖະກິດໃນໄລຍະໃໝ່, ກຳນົດມາດຕະການຕໍ່ຜູ້ລະເມີດໃຫ້ມີຄວາມເຂັ້ມຂຸ້ນຫລາຍຂຶ້ນ ໂດຍສະເພາະໄດ້ກຳນົດໃຫ້ເຫັນວ່າການເຄື່ອນໄຫວປັ່ນປ່ວນອັດຕາແລກປ່ຽນ ແມ່ນມີຄວາມຜິດທາງອາຍາ;

**9. ພາກທີ IX ບົດບັນຍັດສຸດທ້າຍ** ປະກອບດ້ວຍ 2 ມາດຕາ (ປັບປຸງ 1 ມາດຕາຄືມາດຕາສຸດທ້າຍທີ່ໄດ້ກຳນົດໃຫ້ກົດໝາຍສະບັບປັບປຸງນີ້ ມາປ່ຽນແທນສະບັບປັດຈຸບັນ),

**IV. ກົນໄກການຈັດຕັ້ງປະຕິບັດ**

ພາຍຫລັງການເຊັນຮັບຮອງກົດໝາຍສະບັບປັບປຸງນີ້, ທະນາຄານແຫ່ງ ສປປລາວ ໄດ້ກະກຽມກົນໄກການຈັດຕັ້ງປະຕິບັດໄວ້ ຄືດັ່ງນີ້:

1. ເຜີຍແຜ່ກົດໝາຍສະບັບດັ່ງກ່າວ ຢູ່ພາຍໃນທະນາຄານແຫ່ງ ສປປລາວ ເພື່ອໃຫ້ພະນັກງານແຕ່ລະຂັ້ນເຂົ້າໃຈ ແລະ ກຳໄດ້ຢ່າງທົ່ວເຖິງ; ເຜີຍແຜ່ໃຫ້ຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍເລີ່ມຈາກຂະແໜງທະນາຄານ-ແຜນການ-ການເງິນ ແລະ ສັງຄົມ ຮັບຮູ້ເຂົ້າໃຈກ່ຽວກັບຫລັກການ, ລະບຽບການໃນການຄຸ້ມຄອງການເຄື່ອນໄຫວທີ່ຕິດພັນກັບເງິນຕາຕ່າງປະເທດ ໃຫ້ໄດ້ດີຂຶ້ນ;

2. ທົບທວນຄືນຄວາມສອດຄ່ອງຂອງບັນດານິຕິກຳກຸ່ມກົດໝາຍທີ່ກ່ຽວຂ້ອງ ເພື່ອພິຈາລະນາປັບປຸງ ແລະ ຜັນຂະຫຍາຍສ້າງນິຕິກຳລຸ່ມກົດໝາຍສະບັບປັບປຸງໃໝ່ນີ້ ໃຫ້ໄດ້ຢ່າງໜ້ອຍ 14 ສະບັບ ເປັນຕົ້ນ ນິຕິກຳຂັ້ນລັດຖະບານ 1 ສະບັບ, ນິຕິກຳຂັ້ນຜູ້ວ່າການທະນາຄານແຫ່ງ ສປປລາວ 13 ສະບັບ ລວມທັງຍຸດທະສາດຄຸ້ມຄອງໜີ້ສິນຕໍ່ຕ່າງປະເທດຂອງ ສປປລາວ ຮອດປີ 2035;

3. ປັບປຸງລະບົບຄຸ້ມຄອງເງິນຕາຕ່າງປະເທດຕິດພັນກັບການນຳເຂົ້າ-ສົ່ງອອກ, ເງິນລົງທຶນໂດຍກົງຈາກຕ່າງປະເທດ (FDI), ເງິນແຮງງານ ໃຫ້ເປັນລະບົບທັນສະໄໝ ໂດຍມີການນຳໃຊ້ລະບົບການຕິດຕາມຜ່ານບັນຊີຄຸ້ມຄອງພິເສດ, ນຳໃຊ້ເຕັກໂນໂລຊີທາງດ້ານການເງິນ ແລະ ການຊຳລະອື່ນໆ ເພື່ອໃຫ້ການຄຸ້ມຄອງທັນສະພາບ ແລະ ຮັບປະກັນຫລາຍຂຶ້ນ,

4. ປັບປຸງກົນໄກການປະສານງານ, ການແລກປ່ຽນຂໍ້ມູນກັບຂະແໜງການກ່ຽວຂ້ອງ ໃຫ້ເປັນລະບົບທີ່ຄ່ອງຕົວຫລາຍຂຶ້ນ ໂດຍມີການສ້າງບົດບັນທຶກຄວາມເຂົ້າໃຈຮ່ວມກັນ, ປະສານງານ, ເຊື່ອມຖານຂໍ້ມູນເພື່ອແລກປ່ຽນຂໍ້ມູນຂ່າວສານລະຫວ່າງກັນຫລາຍຂຶ້ນ, ແບ່ງຄວາມຮັບຜິດຊອບໃຫ້ຈະແຈ້ງຂຶ້ນ ເພື່ອເປັນການຊຸກຍູ້ການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ໃຫ້ໄດ້ດີຍິ່ງຂຶ້ນ;

5. ກຳນົດຕົວຊີ້ວັດປະສິດທິພາບຂອງການຈັດຕັ້ງປະຕິບັດຈຳນວນໜຶ່ງ (Key Performance Indicators: KDis) ແລະ ມີການປະເມີນຜົນໄດ້ຮັບຂອງການຈັດຕັ້ງປະຕິບັດກົດໝາຍສະບັບປັບປຸງນີ້ໃນທ້າຍສະໄໝຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (ປີ 2025).

**V. ຄາດຄະເນຜົນໄດ້ຮັບ**

ພາຍຫລັງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ໄດ້ຮັບການຮັບຮອງ ແລະ ປະກາດໃຊ້ຄາດວ່າຈະມີຜົນດີ ດັ່ງນີ້:

1. ການຄຸ້ມຄອງກະແສເງິນຕາຕ່າງປະເທດເຂົ້າ-ອອກ ສປປລາວ ມີປະສິດທິພາບ ແລະ ໄດ້ຮັບປະສິດທິຜົນສູງຂຶ້ນ ເປັນຕົ້ນສາມາດຄຸ້ມຄອງລາຍຮັບຈາກການສົ່ງອອກ, ລາຍຮັບລະຫວ່າງປະເທດ, ລາຍຮັບຈາກການລົງທຶນຕ່າງປະເທດຜ່ານລະບົບທະນາຄານ ໄດ້ຫລາຍຂຶ້ນ; ເຮັດໃຫ້ມີເງິນໂອນເຂົ້າຜ່ານລະບົບທະນາຄານໃນລະດັບສະເລ່ຍ 50% ຂຶ້ນໄປຂອງມູນຄ່າການສົ່ງອອກທັງໝົດ; ເປັນເງື່ອນໄຂອຳນວຍໃຫ້ທະນາຄານທຸລະກິດສາມາດເກັບຊື້ເງິນຕາຕ່າງປະເທດໄດ້ເພີ່ມຂຶ້ນ, ຊ່ວຍໃຫ້ເງິນຕາຕ່າງປະເທດ ເຂົ້າສູ່ລະບົບທະນາຄານຫລາຍຂຶ້ນ;

2. ການຄຸ້ມຄອງການກູ້ຢືມຈາກຕ່າງປະເທດ ຂອງລັດຖະບານ, ສະຖາບັນການເງິນ ແລະ ເອກະຊົນອື່ນໆ ເປັນລະບົບຫລາຍຂຶ້ນ; ຫລຸດຜ່ອນແຮງກົດດັນຕໍ່ພັນທະໃນການຊຳລະໜີ້ສິນຕໍ່ຕ່າງປະເທດໃນອະນາຄົດ ປະເທດເຮົາສາມາດມີເງື່ອນໄຂໃນການນຳໃຊ້ແຫລ່ງທຶນເງິນຕາຕ່າງປະເທດເຂົ້າໃນການພັດທະນາປະເທດຊາດໃນດ້ານອື່ນໆ ຫລາຍຂຶ້ນ;

3. ການນຳໃຊ້ເງິນຕາຕ່າງປະເທດແບບຊະຊາຍ, ການແລກປ່ຽນເງິນຕາ, ການເຄື່ອນໄຫວທຸລະກິດຕິດພັນກັບເງິນຕາຕ່າງປະເທດ ທີ່ບໍ່ຖືກກົດໝາຍ ຈະຫລຸດຜ່ອນລົງ ແລະ ມີກະແສເງິນຕາຕ່າງປະເທດຈໍລະຈອນເຂົ້າ ແລະ ໝູນວຽນໃນລະບົບທະນາຄານນັບມື້ນັບຫລາຍຂຶ້ນ;

4. ປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ແກ່ຖານະການຊຳລະກັບຕ່າງປະເທດ, ເພີ່ມລະດັບຄັງສຳຮອງເງິນຕາຕ່າງປະເທດ; ສ້າງຄວາມເຊື່ອໝັ້ນຕໍ່ຄ່າເງິນກີບ, ຫລຸດຜ່ອນຄວາມຕ້ອງການຖືຄອງ ແລະ ຊົມໃຊ້ເງິນຕາຕ່າງປະເທດ ຂອງສັງຄົມ ໃຫ້ນັບມື້ນັບຢູ່ໃນລະດັບທີ່ໜ້ອຍລົງ; ຊ່ວຍຍົກສູງປະສິດທິຜົນຂອງການດຳເນີນນະໂຍບາຍຂອງທະນາຄານແຫ່ງ ສປປລາວ ກໍຄືຮັບປະກັນໄດ້ສະຖຽນລະພາບເງິນຕາແຫ່ງຊາດໃຫ້ໝັ້ນທ່ຽງແລະຍືນຍົງ.

ທັງໝົດນີ້ ແມ່ນສະພາບການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ໂດຍສັງເຂບ ເພື່ອສະເໜີກອງປະຊຸມພິຈາລະນາດ້ວຍ. ສຳລັບເນື້ອໃນລະອຽດໃນການປັບປຸງຕິດພັນກັບແຕ່ລະມາດຕາຂອງຮ່າງກົດໝາຍສະບັບນີ້ ແມ່ນສະເໜີໃຫ້ບັນດາທ່ານພິຈາລະນາຈາກເອກະສານທີ່ໄດ້ແຈກຢາຍດ້ວຍ.




## ຕາໃຫຍ່ກວ່າທ້ອງ

ໂດຍ: ດົ້ນກົບເມກ

ຫາກວ່າໃຜກໍຕາມທີ່ຢາກສ້າງຊີວິດດ້ວຍການຂາດຄວາມຮອບຄອບ ບໍ່ມີສະຕິປັນຍາ ແທງບັນຫາໃຫ້ຊອດ ຫລາຍກໍລະນີອາດຕົກລັກສະນະຕາໃຫຍ່ກວ່າທ້ອງ ເພາະເບິ່ງເຫັນແຕ່ແນວຢາກໄດ້ ເຊິ່ງບາງຄົນກໍສ້າງຊີວິດດ້ວຍການຕິດໜີ້ ຢືມເງິນມາສ້າງພາບພົດ ຊື້ວັດຖຸສິ່ງຂອງເຄື່ອງໃຊ້ ເພື່ອໃຫ້ມັນໂກ້ມັນຄືໜ້າຄືຕາກັບໝູ່ຄູ່ ເຊິ່ງສະພາບປັດຈຸບັນນີ້ ບໍ່ມີໃຜກ້າອ້າປາກປະຕິເສດໄດ້ວ່າແຂ່ງຂັນກັນແບບວັດຖຸນິຍົມ.

ພວກເຮົາອາດໄດ້ຍິນເຂົາໂສກັນວ່າ ເວລາໄປວຽກ-ລົມວຽກທຸລະກິດ ຖ້າແຕ່ງໂຕບໍ່ຫລູຫລາ, ບໍ່ມີລົດໃຫຍ່ຂີ່ ເຂົາບໍ່ລົມນຳ ...... ນີ້ມັນບົ່ງບອກວ່າ ໃຜເປັນຜູ້ສ້າງຄ່າວັດຖຸນິຍົມ ບາງຄົນຈຶ່ງຍອມຕິດໜີ້ສະຖາບັນການເງິນ ເພື່ອມາສ້າງພາບພົດ. ເຫັນຊ້າງຂີ້ກໍຢາກຂີ້ຕາມຊ້າງ. ບາງຄົນກ້າວຂຶ້ນແຕ່ພະລາດລົ້ມ ຍ້ອນຂາດພື້ນຖານຊີວິດ ເພາະໃນຫົວສະໝອງມີແຕ່ແນວຢາກໄດ້ຈົນເກີນກຳລັງຄວາມສາມາດຂອງຕົນເອງ, ບາດພໍຮອດຂາລົງຫາແນວຊິຈັ້ງບໍ່ມີ ຂາຍລົດທີ່ຈ່າຍບໍ່ທັນໝົດ ຫລື ເຮືອນຊິຢູ່ກໍບໍ່ມີ.....!

ການເບິ່ງສິ່ງໃດດ້ວຍສາຍຕາແຫ່ງຄວາມໂລບ ຢາກໄດ້ເກີນຂອບເຂດເຂົາເອີ້ນວ່າ ຕາໃຫຍ່ກວ່າທ້ອງ, ທ້ອງເປັນຜູ້ຢາກ ປາກເປັນຜູ້ກິນ ຫລື ຖ້າກິນບໍ່ເປັນກໍເປັນໜີ້..., ເວົ້າເລື່ອງກິນນີ້ ຕ້ອງໄດ້ລະວັງນໍ! ເພາະການກິນມີຫລາຍແບບ ດັ່ງສຸພາສິດບູຮານເວົ້າວ່າ ກິນມຳໆ ບໍ່ຄຳເບິ່ງທ້ອງ ຫລື ຜູ້ກິນໆພໍຮາກ ສ່ວນຜູ້ຢາກກໍຢາກພໍຕາຍ...

ຜູ້ຂຽນເຂົ້າໃຈວ່າ: ການສ້າງຊີວິດຢາກໄດ້ດີ, ຢາກຮັ່ງມີ ເປັນສິ່ງທີ່ດີແຕ່ຖ້າຄວາມຢາກເກີນກຳລັງ ຫລືວ່າມັນມີສິ່ງເຊື່ອງຊ້ອນຢູ່ຂ້າງຫລັງຄວາມຢາກ, ບາງຄົນກໍເວົ້າວ່າ: ກິນພວມຮ້ອນ ຟ້ອນພວມເມົາ, ຜູ້ຂຽນຈຶ່ງສຸພາສິດບູຮານສອນວ່າ: ຢາກມີຫລາຍໄຂ່ ຢາກໄດ້ຫລາຍຕາຍ ເພາະມັນເກີນກຳລັງທີ່ມີຢູ່, ສຳຄັນບໍ່ເຮັດຕາໃຫຍ່ກວ່າທ້ອງ ມັນຊິເປັນນິທານ ກ່ອງເຂົ້ານ້ອຍຂ້າແມ່ຕາຍ!.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ